ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສະຫວັນນະເຂດ

ເລກທີ 712 /ຈຂ

ສະຫວັນນະເຂດ, ວັນທີ 09 ເມສາ 2025

# ຂໍ້ຕົກລົງ
# ວ່າດ້ວຍການກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ທົ່ວແຂວງສະຫວັນນະເຂດ (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ພາກທີ III ໝວດທີ 4 ມາດຕາ 20 ຂໍ້ 13;
- ອີງຕາມ ກົດໝາຍວ່າດ້ວຍ ທີ່ດິນ (ສະບັບປັບປຸງ) ເລກທີ 70/ ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍ ອາກອນທີ່ດິນ ສະບັບເລກທີ 35/ພສຊ, ລົງວັນ 17 ກໍລະກົດ 2023;
- ອີງຕາມ ຄຳແນະນຳຂອງລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ວ່າດ້ວຍການປະເມີນລາຄາທີ່ດິນ ສະບັບເລກທີ 0040/ກຊສ, ລົງວັນ 12 ມັງກອນ 2023;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 08 ຂອງສະພາປະຊາຊົນແຂວງສະຫວັນນະເຂດ ຊຸດທີ II ສະບັບເລກທີ 34 /ສພຂ.ສຂ, ລົງວັນທີ 27 ທັນວາ 2024 ວ່າດ້ວຍການຮັບຮອງເອົາຂໍ້ຕົກລົງວ່າດ້ວຍການກຳນົດເຂດປະ ເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງທົ່ວແຂວງ ສະຫວັນນະເຂດ (ສະບັບປັບປຸງ).

## ເຈົ້າແຂວງ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການໃນການກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ເພື່ອເປັນບ່ອນອີງໃນການຄິດໄລ່ຄ່າທຳນຽມ ການເຄື່ອນໄຫວອຸງກຈົດທະບຽນທີ່ດິນ ແລະ ສິ່ງປຸກສ້າງ ໃຫ້ມີປະສິດທິພາບ, ປະສິດທິຜົນສູງ ເພື່ອຮັບປະກັນການຊື້ຂາຍ, ມອບໂອນ, ການສືບທອດມູນມໍຣະດົກ ກ່ຽວກັບສິດນຳໃຊ້ທີ່ດິນຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພັກລັດທີ່ໄດ້ຮັບສິດນຳໃຊ້ ແລະ ສິດຄຸ້ມຄອງທີ່ດິນປະເພດຕ່າງໆ, ການປະຕິບັດນະໂຍບາຍກ່ຽວກັບທີ່ດິນ, ການເກັບອາກອນທີ່ດິນ, ຈາກການໂອນສິດນຳໃຊ້ທີ່ດິນຄືນ ແນໃສ່ຮັບປະກັນຕິດຕາມກວດກາ ການເກັບລາຍຮັບຈາກທີ່ດິນ ແລະ ສິ່ງປຸກສ້າງ, ພ້ອມທັງປະຕິບັດສິດ ແລະ ພັນທະຂອງຕົນໃຫ້ຖືກຕ້ອງຕາມລະບຽບການ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງສະຫວັນນະເຂດ ໃຫ້ມີການຂະຫຍາຍຕົວຂຶ້ນເທື່ອລະກ້າວ, ສັງຄົມມີຄວາມສາມັກຄີ ຍຸຕິທຳ ແລະ ສີວິໄລ.

**ມາດຕາ 2 ການປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ**

ການປະເມີນລາຄາທີ່ດິນແມ່ນ ການກຳນົດລາຄາທີ່ດິນແຕ່ລະເຂດ ແລະ ແຕ່ລະປະເພດ ຢູ່ພາຍໃນທ້ອງແຂວງສະຫວັນນະເຂດ ໂດຍອີງໃສ່ຈຸດພິເສດທາງດ້ານທີ່ຕັ້ງພູມສັນຖານ, ພື້ນຖານໂຄງລ່າງ ແລະ ລະດັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

ການປະເມີນລາຄາສິ່ງປຸກສ້າງ ແມ່ນການກຳນົດລາຄາປະເພດອາຄານທີ່ນຳໃຊ້ເປັນທີ່ຢູ່ອາໄສ, ສະຖານທີ່ເຮັດວຽກ ແລະ ກິດຈະການດ້ານຕ່າງໆ.

ການປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງແມ່ນ ອີງໃສ່ອົງປະກອບ, ທີ່ຕັ້ງ ແລະ ລັກສະນະຂອງດິນ, ປະເພດສິ່ງປຸກສ້າງ, ລະບົບພື້ນຖານໂຄງລ່າງ, ການພັດທະນາທີ່ດິນ ແລະ ຄຸນນະພາບຂອງທີ່ດິນ.

**ມາດຕາ 3 ອະທິບາຍຄຳສັບ**

1. ທີ່ດິນ ແມ່ນເນື້ອທີ່ດິນທັງໝົດຢູ່ໃນເຂດແດນຂອງ ສປປລາວ ປະກອບດ້ວຍ: ໜ້າດິນ, ພື້ນດິນ, ເກາະດອນ ແລະ ດິນພື້ນນ້ຳ, ທີ່ດິນ ແມ່ນຊັບພະຍາກອນອັນລ້ຳຄ່າ ແລະ ທຶນຮອນອັນມະຫາສານຂອງຊາດທີ່ເປັນບ່ອນດຳລົງຊີວິດ ແລະ ທຳມາຫາກິນຂອງພົນລະເມືອງລາວ, ເປັນພາຫະນາອັນສຳຄັນ ແລະ ປັດໃຈຕົ້ນຕໍຂອງການຜະລິດ, ການພັດທະນາເສດຖະກິດ-ສັງຄົມ ແລະ ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;
2. ສິ່ງປຸກສ້າງຕ່າງໆ ໝາຍເຖິງອາຄານທີ່ໃຊ້ເປັນທີ່ຢູ່ອາໄສ, ສະຖານທີ່ເຮັດວຽກງານ ຫຼື ກິດຈະການດ້ານຕ່າງໆເຊັ່ນ: ດ້ານສາທາລະນະສຸກ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການສຶກສາ, ວັດທະນະທຳ-ສັງຄົມ, ສາດສະໜາ, ກິລາ, ທຸລະກິດການຄ້າ, ອຸດສະຫະກຳ, ກະສິກຳ ແລະ ອື່ນໆ;
3. ການຈົດທະບຽນນິຕິກຳສິ່ງປຸກສ້າງ ແມ່ນການບັນທຶກທຸກຂໍ້ມູນຂອງສິ່ງປຸກສ້າງທີ່ຕິດພັນກັບການປ່ຽນແປງສິດນຳໃຊ້ທີ່ດິນ ເຂົ້າໃສ່ປຶ້ມຈົດທະບຽນນິຕິກຳ;
4. ທີ່ຕັ້ງ ແລະ ລັກສະນະຂອງດິນ ໝາຍເຖິງຈຸດພິເສດບ່ອນທີ່ດິນຕັ້ງຢູ່, ຂອບເຂດລັກສະນະພື້ນທີ່ດິນເຊັ່ນ: ພຽງ, ໂນນ, ຕ່ຳ, ສູງ, ທິວທັດສະພາບແວດລ້ອມ ແລະ ອື່ນໆ;
5. ປະເພດສິ່ງປຸກສ້າງ ໝາຍເຖິງແບບຮູບຊົງ, ລັກສະນະຂອງອາຄານ;
6. ລະບົບພື້ນຖານໂຄງລ່າງ ໝາຍເຖິງເງື່ອນໄຂສະດວກເຂົ້າເຖິງຕອນດິນ ແລະ ສິ່ງປຸກສ້າງມີຖະໜົນ, ເສັ້ນທາງ, ລະບົບສາທາລະນູປະໂພກ, ໃຫ້ແກ່ຂອບເຂດບໍລິເວນທີ່ໄດ້ຈັດສັນ ແລະ ສ້າງຂຶ້ນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
7. ການພັດທະນາທີ່ດິນ ໝາຍເຖິງການເຮັດໃຫ້ສະພາບ ແລະ ລັກສະນະຂອງດິນປ່ຽນແປງມີມູນຄ່າເພີ່ມຂຶ້ນໂດຍມີການລົງທຶນໃສ່ທີ່ດິນເພື່ອເປັນບ່ອນປຸກສ້າງ, ການຜະລິດ, ການດຳເນີນທຸລະກິດ ແລະ ອື່ນໆ;
8. ຄຸນນະພາບຂອງດິນ ໝາຍເຖິງຄວາມອຸດົມສົມບູນຂອງດິນເພື່ອຮັບໃຊ້ໃນເປົ້າໝາຍຕ່າງໆ ຕາມຄວາມເໝາະສົມໃນການພັດທະນາ ຕາມທ່າແຮງຂອງດິນໃນເຂດນັ້ນ;
9. ແຜນທີ່ເຂດປະເມີນລາຄາທີ່ດິນ ໝາຍເຖິງແຜນທີ່ໆກຳນົດເຂດປະເມີນລາຄາທີ່ດິນ ໄວ້ເພື່ອການປະເມີນລາຄາທີ່ດິນໃນແຕ່ລະເຂດດັ່ງກ່າວ, ເຊິ່ງແຜນທີ່ຈະກວມເອົາພື້ນທີ່ໃນຂອບເຂດຂອງເມືອງ, ເທດສະບານນະຄອນທີ່ມີການສຳຫຼວດ, ກຳນົດເຂດ ແລະ ມີການກຳນົດສັນຍາລັກແຕ່ລະເມືອງ, ເທດສະບານ, ນະຄອນ ໂດຍກຳກັບເປັນຕົວອັກສອນພາສາລາແກັງ ເຊັ່ນ: A,B,C…. ເຊິ່ງຈະຖືກແບ່ງອອກເປັນຫຼາຍເຂດຍ່ອຍ ເອີ້ນວ່າ ເຂດປະເມີນລາຄາທີ່ດິນ;
10. ເຂດປະເມີນລາຄາທີ່ດິນ ໝາຍເຖິງພື້ນທີ່ໃນແຜນທີ່ເຂດປະເມີນລາຄາທີ່ດິນຂອງເມືອງ ເທດສະບານ,ນະຄອນ ເຊິ່ງຖືກຈັດແບ່ງເປັນຫຼາຍເຂດ ໂດຍອີງໃສ່ລັກສະນະ ແລະ ຈຸດພິເສດພື້ນທີ່ເຊັ່ນ: ເຂດຕົວເມືອງ, ເຂດອ້ອມໃຈກາງຕົວເມືອງ, ເຂດຂະຫຍາຍຕົວເມືອງ, ເຂດຊານເມືອງ ແລະ ເຂດຊົນນະບົດ, ໃນນັ້ນປະກອບມີ ເຂດການຄ້າບໍລິການ, ເຂດທີ່ຢູ່ອາໄສ, ເຂດອຸດສາຫະກຳ, ເຂດກຳລັງພັດທະນາ ແລະ ເຂດອື່ນໆ ເຂດປະເມີນລາຄາທີ່ດິນມີລະຫັດກຳກັບຢູ່ໃນແຕ່ລະເຂດ ເຊັ່ນ: $A_1$, $A_2$ ,$A_3$ ຫຼື $B_1$, $B_2$ ,$B_3$, ຫຼື $C_1$, $C_2$, $C_3$ ລະຫັດດັ່ງກ່າວຂຶ້ນກັບຈຳ ນວນເຂດໃນແຕ່ບະເມືອງ, ເທດສະບານ;

11. ຕາຕະລາງລາຄາປະເມີນທີ່ດິນ ໝາຍເຖິງຫົວໜ່ວຍລາຄາທີ່ດິນ ທີ່ໄດ້ກຳນົດເຂົ້າໃນຕາຕະລາງລາຄາປະເມີນທີ່ດິນ ຕາມແຕ່ລະປະເພດຖະໜົນຢູ່ໃນແຕ່ລະເຂດປະເມີນລາຄາທີ່ດິນ ໂດຍຜ່ານການເກັບກຳຂໍ້ມູນລາຄາຊື້ຂາຍ ສິດນຳໃຊ້ທີ່ດິນຕົວຈິງຕາມລາຄາຕະຫຼາດ ແລ້ວນຳມາຄົ້ນຄ້ວາ, ວິເຄາະຂໍ້ມູນທາງດ້ານວິຊາການ ແລະ ໄດ້ຜ່ານການຮັບຮອງຈາກສະພາປະຊາຊົນແຂວງ;

12. ປະເພດເສັ້ນທາງ ໝາຍເຖິງປະເພດທາງທີ່ໄດ້ກຳນົດລາຄາທີ່ດິນ ເຂົ້າໃນຕາຕະລາງລາຄາທີ່ດິນ ແລະ ແຜນທີ່ເຂດປະເມີນລາຄາທີ່ດິນ ປະກອບມີທາງປະເພດ 1, ທາງປະເພດ 2, ທາງປະເພດ 3 ແລະ ທາງປະເພດ 4;

13. ຖະໜົນສາຍຫຼັກ (ຖະໜົນປະເພດ 1) ແມ່ນເສັ້ນທາງສາຍເອກ ທີ່ກຳນົດເຂົ້າໃນເຂດປະເມີນລາຄາທີ່ດິນ ເຊັ່ນ: ທາງຫຼວງແຫ່ງຊາດ, ທາງຫຼວງຂອງແຂວງ, ທາງຫຼວງຂອງເມືອງ, ທາງຕົວເມືອງ ທີ່ເປັນຖະໜົນຫຼວງ ແລະ ຖະໜົນໃຫຍ່ ມີການສັນຈອນຫຼາຍຢູ່ຕົວເມືອງ ລວມທັງການສັນຈອນການເຂົ້າ-ອອກຕົວເມືອງ ເຊິ່ງໄດ້ກຳນົດເປັນສີບົວເຂົ້າໃນແຜນທີ່ເຂດປະເມີນລາຄາທີ່ດິນ ໂດຍມີຫົວໜ່ວຍລາຄາປະເມີນທີ່ດິນສູງກ່ວາທາງປະເພດອື່ນ ຢູ່ໃນເຂດປະເມີນລາຄາທີ່ດິນ;

14. ຖະໜົນສາຍເຊື່ອມຕໍ່ (ຖະໜົນປະເພດ 2) ແມ່ນເສັ້ນທາງສານເຊື່ອມຕໍ່ຕ່າງໆຈາກຖະໜົນສາຍເອກ ເຊັ່ນ: ທາງຕົວເມືອງ ທີ່ເປັນຖະໜົນກາງ ແລະ ຖະໜົນນ້ອຍ ມີການສັນຈອນຮອງລົງມາຈາກຖະໜົນສາຍເອກຂອງຕົວເມືອງ ເຊິ່ງໄດ້ກຳນົດເປັນສີຟ້າ ເຂົ້າໃນແຜນທີ່ເຂດປະເມີນລາຄາທີ່ດິນ ໂດຍມີຫົວໜ່ວຍລາຄາປະເມີນທີ່ດິນ ຮອງຈາກຖະໜົນສາຍເອກ ຢູ່ໃນເຂດປະເມີນລາຄາທີ່ດິນ;

15. ຖະໜົນສາຍແຈກ (ຖະໜົນປະເພດ 3) ແມ່ນເສັ້ນທາງສາຍແຈກທີ່ເຊື່ອມຈາກຖະໜົນສາຍເອກ, ຖະໜົນເຊື່ອມຕໍ່ ເຊັ່ນ: ທາງຊົນນະບົດ, ທາງຕົວເມືອງ ທີ່ກຳນົດເປັນທາງຮ່ອມ, ທາງສະເພາະທີ່ໄດ້ຮັບການພັດທະນາ ທີ່ມີປະລິມານການສັນຈອນຮອງຈາກຖະໜົນເຊື່ອມຕໍ່ ເປັນທາງເຊື່ອມຈອດລະຫວ່າງບ້ານຫາບ້ານ, ສະຖານທີ່ການຜະລິດ, ການບໍລິການ ແລະ ແຫຼ່ງຊັບພະຍາກອນທຳມະຊາດ ເຊິ່ງໄດ້ກຳນົດເປັນສີຂຽວ ເຂົ້າໃນແຜນທີ່ເຂດປະເມີນລາຄາທີ່ດິນ ໂດຍມີຫົວໜ່ວຍລາຄາປະເມີນທີ່ດິນ ຮອງຈາກຖະໜົນສາຍເຊື່ອມຕໍ່ຢູ່ໃນເຂດປະເມີນລາຄາທີ່ດິນ;

16. ຖະໜົນດັ້ງເດີມ (ປະເພດ 4) ແມ່ນເສັ້ນທາງດັ້ງເດີມ ທີ່ເປັນເສັ້ນທາງແບບທຳມະຊາດ ແລະ ເສັ້ນທາງສະເພາະ ທີ່ຍັງບໍ່ໄດ້ຮັບການພັດທະນາ ເຊິ່ງເສັ້ນທາງດັ່ງກ່າວ ບໍ່ໄດ້ກຳນົດເປັນສີໃດໜຶ່ງ ຢູ່ໃນແຜນທີ່ເຂດປະເມີນລາຄາທີ່ດິນ ໂດຍມີຫົວໜ່ວຍລາຄາປະເມີນທີ່ດິນ ຕ່ຳກ່ວາຖະໜົນສາຍແຈກ ຢູ່ໃນເຂດປະເມີນລາຄາທີ່ດິນ;

17. ການປະເມີນລາຄາທີ່ດິນຕາມສູດຄິດໄລ່ ໝາຍເຖິງວິທີການປະເມີນລາຄາທີ່ດິນ ແບບອີງກອ້າງທີ່ສ້າງຂຶ້ນບົນພື້ນຖານການເກັບກຳຂໍ້ມູນກ່ຽວກັບການເຄື່ອນໄຫວຂອງຕະຫຼາດທີ່ດິນ ຊຶ່ງມີແຜນທີ່ເຂດປະເມີນລາຄາທີ່ດິນ, ຕາຕະລາງອັດຕາຄິດໄລ່ສຳລັບທີ່ດິນ ແລະ ສິ່ງປຸກສ້າງ ເພື່ອນຳໃຊ້ເຂົ້າໃນການຄິດໄລ່ຄ່າທຳນຽມຈົດທະບຽນນິຕິກຳກ່ຽວກັບທີ່ດິນ;

18. ການປະເມີນລາຄາແບບສະເພາະ ໝາຍເຖິງການປະເມີນລາຄາທີ່ດິນຕອນໃດໜຶ່ງ ຕາມການຮ້ອງຂໍຂອງພາກສ່ວນກ່ຽວຂ້ອງເປັນແຕ່ລະກໍລະນີ ເປັນຕົ້ນການຊື້-ຂາຍ, ແລກປ່ຽນສິດນຳໃຊ້ທີ່ດິນ, ເອົາທີ່ດິນເຂົ້າເປັນຮຸ້ນ, ເປັນຫຼັກຊັບຄ້ຳປະກັນ, ການຂາຍຕາມຄຳຕັດສິນຂອງສານ ແລະ ອື່ນໆ;

19. ເຮືອນແບບຊົງລາວ ໝາຍເຖິງເຮືອນທີ່ມີໂຄງສ້າງ ກໍ່ສ້າງດ້ວຍໄມ້ເປັນສ່ວນໃຫຍ່ (ໄມ້ທີ່ໃຊ້ເປັນໄມ້ເນື້ອແຂງ, ມີ ລາຄາຂ້ອນຂ້າງສູງ), ມີລັກສະນະພື້ນຍົກສູງ, ຝາແອ້ມດ້ວຍໄມ້ປະກົບກັນ ຫຼື ເປັນລູກພັກ, ຫຼັງຄາຊົງສູງດ້ວຍໄມ້ ຫຼື ດິນຂໍ;

20. ເຮືອນກໍ່ແບບທັນສະໄໝ ໝາຍເຖິງເຮືອນທີ່ມີໂຄງສ້າງມາດຕະຖານ ນຳໃຊ້ເຕັກນິກສູງ, ວັດສະດຸນຳໃຊ້ມີມາດຕະຖານ ແລະ ຊະນິດມີລາຄາແພງ, ມີການຕົກແຕ່ງລວດລາຍພາຍໃນ ແລະ ພາຍນອກ, ເຮືອນມີລັກສະນະພື້ນຊຸດິນເທເບຕົງ, ຝາກໍ່, ຫຼັງຄາມຸງດ້ວຍດິນຂໍ, ກະເບື້ອງ ຫຼື ຊີແພັກ;

21. ເຮືອນກໍ່ທຳມະດາ ໝາຍເຖິງເຮືອນທີ່ມີແບບໂຄງສ້າງທີ່ບໍ່ໄດ້ມາດຕະຖານ ແລະ ບໍ່ມີເຕັກນິກຊ່າງ, ວັດສະດຸທີ່ນຳໃຊ້ຊະນິດມີລາຄາບໍ່ແພງ, ເຮືອນມີລັກສະນະພື້ນຊູດິນເທເບຕົງ, ຝາກໍ່, ຫຼັງຄາມຸງດ້ວຍສັງກະສີ, ກະເບື້ອງ ຫຼື ຊີແພັກ;

22. ເຮືອນສອງຊັ້ນ ເຄິ່ງກໍ່ເຄິ່ງໄມ້ ໝາຍເຖິງເຮືອນທີ່ມີໂຄງສ້າງວັດສະດຸປະສົມເຊັ່ນ: ເສົາ, ພື້ນຊັ້ນລຸ່ມ ຊັ້ນລຸ່ມເປັນເບຕົງ, ຝາກໍ່ດ້ວຍດິນຈີ່ ຫຼື ດິນບ່ອກ, ໂຄງສ້າງຊັ້ນເທິງເປັນໄມ້, ຝາແອ້ມດ້ວຍໄມ້, ຫຼັງຄາມຸງດ້ວຍ ສັງກະສີ ຫຼື ກະເບື້ອງ;

23. ເຮືອນໄມ້ ໝາຍເຖິງເຮືອນທີ່ມີໂຄງສ້າງເຮັດດ້ວຍໄມ້ທັງໝົດເປັນຕົ້ນແມ່ນ: ພື້ນ, ຝາແອ້ມດ້ວຍ ໄມ້, ຫຼັງຄາມຸງດ້ວຍສັງກະສີ ຫຼື ກະເບື້ອງ ມີລັກສະນະການປຸກສ້າງແບບປະສົມປະສານ.

**ມາດຕາ 4 ນະໂຍບາຍຂອງລັດ**

ອົງການປົກຄອງແຂວງສະຫວັນນະເຂດ ຊຸກຍູ້, ສົ່ງເສີມທຸກພາກສ່ວນເສດຖະກິດ-ສັງຄົມ, ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນການຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ, ພັດທະນາທີ່ດິນໃຫ້ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍຢ່າງມີປະສິດທິຜົນສູງ.

ອົງການປົກຄອງແຂວງສະຫວັນນະເຂດ ໃຫ້ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ຄຸ້ມຄອງ ແລະ ນຳໃຊ້ທີ່ດິນທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບ ການກຳນົດໄວ້.

ອົງການປົກຄອງແຂວງສະຫວັນນະເຂດ ກຳນົດນະໂຍບາຍອັດຕາສ່ວນຫຼຸດລາຄາ ຫຼືຫຼຸດຜ່ອນຄິດໄລ່ ທີ່ດິນ ແລະ ສິ່ງປຸກສ້າງຕາມສະພາບເງື່ອນໄຂຄວາມເປັນຈິງ, ເພື່ອດຶງດູດ ແລະ ສ້າງສິ່ງອຳນວຍຄວາມສະດວກ ໃຫ້ແກ່ການນຳໃຊ້, ການພັດທະນາ ແລະ ການຫັນສິດນຳໃຊ້ທີ່ດິນແຕ່ລະປະເພດໂດຍສອດຄ່ອງແນວທາງ ນະໂຍບາຍ ແລະ ກົດໝາຍກຳນົດໄວ້ໃນແຕ່ລະໄລຍະ.

**ມາດຕາ 5 (ປັບປຸງ) ຫຼັກການເຄື່ອນໄຫວ**

ການເຄື່ອນໄຫວວຽກງານປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ປະຕິບັດຕາມຫຼັກການດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ມະຕິ, ຄຳສັ່ງ, ນິຕິກຳໃຕ້ກົດໝາຍ;
2. ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ກໍ່ຄືແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງວາງອອກ;
3. ສອດຄ່ອງກັບລາຄາຄວາມເປັນຈິງ ຂອງກົນໄກຕະຫຼາດ ແລະ ຍຸຕິທຳ;
4. ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ, ປະຊາຊົນ ແລະ ທຸກຊັ້ນຄົນໃນສັງຄົມມີສ່ວນຮ່ວມ;
5. ຮັບປະກັນຄວາມໂປ່ງໃສ, ເປີດເຜີຍ ແລະ ສາມາດກວດສອບໄດ້.

**ມາດຕາ 6 ຂອບເຂດນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃນການເຄື່ອນໄຫວຈົດທະບຽນ ນິຕິກຳ ການເຄື່ອນໄຫວສິດ, ປ່ຽນແປງສິດນຳໃຊ້ທີ່ດິນ ແລະ ສິ່ງປຸກສ້າງທົ່ວແຂວງ ສະຫວັນນະເຂດ.

## ໝວດທີ 2
## ເຄື່ອງໝາຍລະຫັດເຂດປະເມີນ
## ຕາຕະລາງກຳນົດເຂດປະເມີນທີ່ດິນ ແລະ ສິ່ງປຸກສ້າງ ການກຳນົດອັດຕາສ່ວນຫຼຸດ

**ມາດຕາ 7 ເຄື່ອງໝາຍ**

ເຄື່ອງໝາຍ ຕາມທີ່ໄດ້ກຳນົດໄວ້ໃນແຜນທີ່ເຂດປະເມີນມູນຄ່າທີ່ດິນ ຂອງແຕ່ລະເມືອງ ແລະ ນະຄອນ ແມ່ນກຳນົດເປັນຕົວອັກສອນສາກົນດັ່ງນີ້: A. B. C. D. E. F. G. H. I. J. K. L. M . N. O

**ມາດຕາ 8 ລະຫັດເຂດປະເມີນ**

ລະຫັດເຂດປະເມີນຂອງເມືອງ ແລະ ນະຄອນ ແມ່ນກຳນົດເປັນຕົວເລກສາກົນ ເລີ່ມແຕ່ 01 ຫາ ຕົວເລກສຸດທ້າຍຕາມເຄື່ອງໝາຍ ເຂດປະເມີນທີ່ກຳນົດໄວ້ໃນມາດຕາ 7 ດັ່ງນີ້:

| | | |
|---|---|---|
| A1 ຫາ A23 | ແມ່ນລະຫັດເຂດປະເມີນ | ນະຄອນໄກສອນ ພົມວິຫານ |
| B1 ຫາ B18 | ແມ່ນລະຫັດເຂດປະເມີນ | ເມືອງອຸທຸມພອນ |
| C1 ຫາ C09 | ແມ່ນລະຫັດເຂດປະເມີນ | ເມືອງອາດສະພັງທອງ |
| D1 ຫາ D15 | ແມ່ນລະຫັດເຂດປະເມີນ | ເມືອງພີນ |
| E1 ຫາ E14 | ແມ່ນລະຫັດເຂດປະເມີນ | ເມືອງເຊໂປນ |
| F1 ຫາ F10 | ແມ່ນລະຫັດເຂດປະເມີນ | ເມືອງນອງ |
| G1 ຫາ G11 | ແມ່ນລະຫັດເຂດປະເມີນ | ເມືອງທ່າປາງທອງ |
| H1 ຫາ H16 | ແມ່ນລະຫັດເຂດປະເມີນ | ເມືອງສອງຄອນ |
| I 1 ຫາ I13 | ແມ່ນລະຫັດເຂດປະເມີນ | ເມືອງຈຳພອນ |
| J1 ຫາ J11 | ແມ່ນລະຫັດເຂດປະເມີນ | ເມືອງຊົນນະບູລີ |
| K1 ຫາ K15 | ແມ່ນລະຫັດເຂດປະເມີນ | ເມືອງໄຊບູລີ |
| L1 ຫາ L13 | ແມ່ນລະຫັດເຂດປະເມີນ | ເມືອງວິລະບູລີ |
| M1 ຫາ M8 | ແມ່ນລະຫັດເຂດປະເມີນ | ເມືອງອາດສະພອນ |
| N1 ຫາ N14 | ແມ່ນລະຫັດເຂດປະເມີນ | ເມືອງໄຊພູທອງ |
| O1 ຫາ O10 | ແມ່ນລະຫັດເຂດປະເມີນ | ເມືອງພະລານໄຊ |

**ມາດຕາ 9 (ປັບປຸງ) ຕາຕະລາງກຳນົດເຂດປະເມີນທີ່ດິນ**

| ລະຫັດ | ຊື່ບ້ານ | ປະເພດຖະໜົນ | | | |
|---|---|---|---|---|---|
| | | (ປະເພດ 1) ຖະໜົນສາຍຫຼັກ (ກີບຕໍ່ຕາແມັດ) | (ປະເພດ 2) ຖະໜົນເຊື່ອມຕໍ່ (ກີບຕໍ່ຕາແມັດ) | (ປະເພດ 3) ຖະໜົນສາຍແຈກ (ກີບຕໍ່ຕາແມັດ) | (ປະເພດ 4) ຖະໜົນດັ້ງເດີມ (ກີບຕໍ່ຕາແມັດ) |
| **ກ.** | **ເຂດປະເມີນລາຄາ ຂອງນະຄອນໄກສອນພົມວິຫານ ລະຫັດ** A ມີ 23 ເຂດປະເມີນ (A1 - A23) | | | | |
| A1 | ບ້ານນາແກ, ໜອງດົນ, ປາກບໍ່ ແລະ ບ້ານອຸດົມວິໄລ. | 280,000 | 180,000 | 60,000 | 20,000 |
| A2 | ບ້ານນາແກ ບ້ານ ໂພນສະຫວ່າງເໜືອ. | 320,000 | 200,000 | 80,000 | 20,000 |
| A3 | ບ້ານຫົວເມືອງເໜືອ ແລະ ບ້ານຫົວເມືອງໃຕ້. | 550,000 | 200,000 | 80,000 | 25,000 |
| A4 | ບ້ານໂພນສະຫວ່າງເໜືອ ແລະ ບ້ານໂພນສະຫວ່າງໃຕ້. | 550,000 | 200,000 | 80,000 | 25,000 |
| A5 | ບ້ານໜອງມີ, ອຸດົມວິໄລ, ບຶງວະ, ດົງໝາກຢາງ, ດົງນາຄຳ ແລະ ບ້ານຫາດອິງຮັງ. | - | 60,000 | 40,000 | 20,000 |
| A6 | ບ້ານໂພນສະຫວ່າງເໜືອ, ໂພນສະຫວ່າງໃຕ້, ໜອງມີ ແລະ ບ້ານບຶງວະ. | - | 70,000 | 50,000 | 25,000 |

| | | | | | |
|---|---|---|---|---|---|
| A7 | ບ້ານສະໜາມໄຊ, ໂພນສະຫວ່າງໃຕ້, ໂນນສະຫວາດ ແລະ ບ້ານໜອງຜື. | 280,000 | 120,000 | 50,000 | 20,000 |
| A8 | ບ້ານຫົວເມືອງໃຕ້, ຫົວເມືອງເໜືອ, ໂພໄຊ ແລະ ບ້ານໂພນສະຫວ່າງໃຕ້. | | 900,000 | 300,000 | 60,000 |
| A9 | ບ້ານໂພໄຊ, ວຽງສະຫວັນ, ຈອມແກ້ວ, ສຸບັນທາ, ໄຊຍະພູມ, ລັດຕະນະລັງສີເໜືອ , ລັດຕະນະລັງສີໃຕ້, ໄຊຍະມຸງຄຸນ, ທ່າແຮ່ ແລະ ບ້ານທ່າເມືອງ. | 550,000 | 280,000 | 150,000 | 50,000 |
| A10 | ບ້ານສຸບັນທາ, ໂພນສະຫວ່າງໃຕ້, ໂພນສະຫວ່າງເໜືອ, ລັດຕະນະລັງສີໃຕ້, ລັດຕະນະລັງສີເໜືອ, ນາເລົ່າ ,ລາດຊະວົງໄຊ, ໄຊຍະມຸງຄຸນ ແລະ ບ້ານສະໜາມໄຊ. | 900,000 | 280,000 | 150,000 | 60,000 |
| A11 | ບ້ານນາເລົ່າ, ລາດຊະວົງໄຊ, ໂພນສະຫວ່າງໃຕ້, ສະໜາມໄຊ ແລະ ບ້ານໂນນສະຫວາດ. | 550,000 | 280,000 | 150,000 | 30,000 |
| A12 | ບ້ານສະພານເໜືອ, ດົງຄຳດວນ, ບ້ານສອນໄຊ, ໄຊຍະມຸງຄຸນ ແລະ ບ້ານໂນນສະຫວາດ. | 550,000 | 180,000 | 80,000 | 30,000 |
| A13 | ບ້ານສະພານໃຕ້, ໂພນສະຫວັນ, ໂພນ ສະອາດ, ສອນໄຊ ແລະ ບ້ານ ດົງຄຳດວນ | 550,000 | 120,000 | 30,000 | 20,000 |
| A14 | ບ້ານສອນໄຊ, ດົງຄຳດວນ, ໂພນຊາຍ, ນາເຊັງ ແລະ ບ້ານດອນເຊັງ. | 250,000 | 60,000 | 30,000 | 10,000 |
| A15 | ບ້ານໂພນຊາຍ, ໂນນສະຫວາດ ແລະ ບ້ານນາເຊັງ. | 220,000 | 60,000 | 30,000 | 10,000 |
| A16 | ບ້ານອຸດົມວິໄລ, ໜອງເດີນ, ບ້ານປາກບໍ່ ແລະ ບ້ານໜອງຜື. | 300,000 | 60,000 | 15,000 | 10,000 |
| A17 | ບ້ານນາເຊັງ, ຊອກ, ດອນເຊັງ, ສົ້ມປ່ອຍ, ນາໂພ, ຜັກຂະ, ໂນນອຸດົມ, ຫ້ວຍໄຜ່, ແກ້ງຫີນສູງ, ດົງຄຳຫຼວງ, ຊອກວາງ ແລະ ບ້ານຫ້ວຍ. | 50,000 | 35,000 | 15,000 | 10,000 |
| A18 | ບ້ານດົງຄຳຫຼວງ, ດົງໝາກຍາງ, ຫ້ວຍ, ໂພນສີມ, ຍາງສູງ, ໂພນສູງ, ດົງນາຄຳ, ສົ້ງ, ຫາດອີງຮັງ, ຊອກ, ບຶງວະ, ນາເຊັງ ແລະ ບ້ານໂນນສະຫວາດ. | 60,000 | 20,000 | 15,000 | 10,000 |
| A19 | ບ້ານສີມສະອາດ, ນາກອຍ, ຊອກວາງ ແລະ ບ້ານດົງຄຳຫຼວງ. | 50,000 | 20,000 | 15,000 | 10,000 |
| A20 | ບ້ານສົ້ງ, ໂພນສີມ, ຫາດອີງຮັງ, ດົງນາຄຳ, ດົງບັງ ແລະ ບ້ານໜອງໂກ່ມ. | 60,000 | 25,000 | 15,0000 | 10,000 |
| A21 | ບ້ານດົງບັງ, ຍາງໂພສີ, ເດືອເຂົາກາດ, ໜອງໂກ່ມ, ນາຈະຫຼືດ, ດົງຄຳດວນ, ເລົ່າງາມ, ຂອນແກ່ນ, ຕົ້ນເຜີ້ງ, ໜໍເມືອງ ແລະ ບ້ານນ້ຳບໍ່. | 60,000 | 25,000 | 15,000 | 10,000 |
| A22 | ບ້ານດອນເຊັງ ແລະ ບ້ານໂພນສະຫວັນ. | 60,000 | – | 15,000 | 10,000 |
| A23 | ບ້ານໜອງເດີນ, ດົງນາຄຳ, ທ່າຊະໂນ, ນາເຕີຍ, ດົງບັງ, ນ້ຳບໍ່, ໜໍເມືອງ, ບຶງທະເລ ແລະ ບ້ານທ່າຫົວຊ້າງ. | 60,000 | 20,000 | 15,000 | 10,000 |

## ຂ. ເຂດປະເມີນລາຄາທີ່ດິນ ຂອງເມືອງອຸທຸມພອນ ລະຫັດ B, ມີ 18 ເຂດປະເມີນ ແຕ່ (B1-B18)

| | | | | | |
|---|---|---|---|---|---|
| B1 | ບ້ານໄຊອຸດົມ, ໄຊບະມຸງຄຸນ, ອຸດົມມີໄຊ, ຈອມເພັດ, ໄຊສົມບູນ, ວັງພັນສີ,ເຊໂນ ຈະເລີນສຸກ, ນະບີວົງໄຊ ແລະ ບ້ານ ຈັນທະລັງສີ. | 150,000 | 70,000 | 35,000 | 15,000 |
| B2 | ບ້ານຈະເລີນສຸກ, ຈັນທະລັງສີ, ສີບຸນເຮືອງ ສະໜາມໄຊ, ພິນເໜືອ, ພິນໃຕ້, ຫ້ວຍສ້າງທອງ ແລະ ບ້ານຫ້ວຍເໜົ້າ. | 70,000 | 30,000 | 15,000 | 5,000 |
| B3 | ບ້ານຈອມເພັດ, ສີບຸນເຮືອງ, ພິນເໜືອ, ພິນໃຕ້, ໄຊສົມບູນ ແລະ ບ້ານໂຄກ. | 70,000 | - | 15,000 | 5,000 |
| B4 | ບ້ານນາທາດ, ໄຊບະມຸງຄຸນ, ໂຄກ ແລະ ບ້ານຈອມເພັດ. | 70,000 | - | 15,000 | 10,000 |
| B5 | ບ້ານໄຊບະມຸງຄຸນ, ນາທາດ, ກາງໂພສີ, ນາຊາຍ ແລະ ບ້ານໄຊອຸດົມ. | 70,000 | - | 15,000 | 10,000 |
| B6 | ບ້ານສະໜາມໄຊ, ໄຊສະອາດ, ວັງແຄນ, ໜອງ ບົວທອງ, ໂນນໝາກຫຍ້າ, ກຸດແຂ້, ຫ້ວຍເໜົ້າ,ໄຊສະອາດ, ວັງແຄນ, ໜອງ ບົວທອງ, ໂນນວິໄລ, ບ້ານຫ້ວຍສ້າງທອງ. | 50,000 | - | 10,000 | 5,000 |
| B7 | ບ້ານໜອງບົວທອງ, ໂນນວິໄລ, ທົ່ງ, ນາ, ນາຂີ້ເຫຼັກ, ໂພນໝາກຫຍ້າ, ກີບມ້າ ແລະ ບ້ານນາກະເຊາະ. | 40,000 | 15,000 | 10,000 | 5,000 |
| B8 | ບ້ານນາຈານ,ໂຄກປ່າຫວາຍ ບ້ານໂຄກ. | 30,000 | - | 10,000 | 5,000 |
| B9 | ບ້ານຫ້ວຍເໜົ້າ, ກຸດແຂ້, ນາກະເຊາະ, ຫົວ ຄຳ, ດົງນ້ອຍ, ໂນນສະຫວ່າງ, ພິນໃຕ້ ແລະ ບ້ານນາຈານ. | - | 15,000 | 10,000 | 5,000 |
| B10 | ບ້ານໄຊອຸດົມ, ເຊໂນ, ຈະເລີນສຸກ, ໄຊບະເພັດ, ສະໜາມໄຊ, ໄຊສະອາດ ແລະ ບ້ານເຫຼົ່າໃຫຍ່. | - | 50,000 | 30,000 | 10,000 |
| B11 | ບ້ານໂນນດອກໄມ້, ໜອງອາຮົງນ້ອຍ, ໜອງຄຳແຮດ, ໄຊອຸດົມ, ໂນນນາຄູນ, ແມດ, ເຫຼົ່າໃຫຍ່, ໄຊບະເພັດ ແລະ ບ້ານວັງແຄນ. | - | 30,000 | 15.000 | 10.000 |
| B12 | ບ້ານແມດ, ໂພນຕາດ, ເຫຼົ່າໃຫຍ່,ສະກຸດ ນາ,ເອ້, ໜອງແປນ ແລະ ບ້ານໂນນວິໄລ. | - | - | 10,000 | 5,000 |
| B13 | ບ້ານແມດ, ນາເກັ່ງ, ນາໂພ, ປ່າ ໜາມ, ນາປົ່ງ, ໂນນອຸດົມ, ໂນນປ່າໄລ, ດົງທ່າ, ດົງໃນ, ນາຄຳ ແລະ ບ້ານດົງຂວາງ. | - | - | 10,000 | 5,000 |
| B14 | ບ້ານໂນນນາຄູນ, ໂພນບານາງ, ອາຮົງ, ໂພນເດື່ອ, ໂພນດູມ, ນາເກັ່ງ, ເອ້ , ນາຫົວຂົວ ແລະ ບ້ານ ໂພນສະຫວ່າງ. | - | 20,000 | 10,000 | 5,000 |
| B15 | ບ້ານໂນນດອກໄມ້, ກາງໂພສີ, ໄຊອຸດົມ, ໂນນນາຄູນ, ນາຫົວຂົວ, ອາຮົງ, ສົມ ສະອາດ,ຜັກຂະຫຍ່າ ແລະ ບ້ານນາຊາຍ. | - | 30,000 | 15,000 | 5,000 |
| B16 | ບ້ານນາຊາຍ, ສົມພັດວິໄລ ແລະ ບ້ານດົງໝາກແງວ. | 50,000 | 20,000 | 10,000 | 5,000 |
| B17 | ບ້ານສົມສະອາດ, ອາຮົງ, ໂພນເດື່ອ, ໂພນທັນ, ນາສະໂນດ, ດົງໝາກແງວ, ນາດູ ແລະ ບ້ານສົມພັດວິໄລ. | - | 15,000 | 10,000 | 5,000 |
| B18 | ບ້ານໂນນອຸດົມ, ໂນນປ່າໄລ, ດົງທ່າ,ດົງໃນ ໜອງແປນ ແລະ ບ້ານນາຄຳ. | - | 10,000 | 8,000 | 5,000 |

## ຄ. ເຂດປະເມີນລາຄາທີ່ດິນ ເມືອງອາດສະພັງທອງ ລະຫັດ C ມີ 9 ເຂດປະເມີນ (C1-C9)

| | | | | | |
|---|---|---|---|---|---|
| C1 | ບ້ານດົງເທັນ ແລະ ບ້ານຕະບອງເພັດ. | 60,000 | 25,000 | 12,000 | 7,000 |

| | | | | | |
|---|---|---|---|---|---|
| C2 | ບ້ານດົງກີໄລ, ພັງໂຮ, ສີວິໄລ , ທົ່ວເມືອງ,ດົງຂວາງ, ໂພນມີກຂຽນ, ຫຼູງໄຊ ,ວັດທະນະສົມບູນ ,ໄຊກໄຊ | 25,000 | 12,000 | 7,000 | 3,000 |
| C3 | ບ້ານດົງເຫັນ, ດະບອງເພັດ, ໜອງປາກຊ່ອງ, ດອນປ່າໄລ, ຂະພັງແກ້ວ, ໜອງໄຊ, ສາມັກຄີໄຊ, ນາໄລ, ໂພນງອຍ, ໂພສີແກ້ວ ແລະ ບ້ານນາຈານ. | 25,000 | 12,000 | 5,000 | 3,000 |
| C4 | ບ້ານດະບອງເພັດ, ຂະພັງແກ້ວ, ນາສະຫວາງ, ທົ່ວເມືອງ, ປົງນາ, ດົງຂວາງ, ແຈລະເມືອງ ປົ່ງກົ່ງ ແລະ ບ້ານດອນປ່າໄລ. | - | 15,000 | 4,000 | 2,000 |
| C5 | ບ້ານດອນປ່າໄລ, ໜອງປາກຊ່ອງ, ດົງຫມາກກໍ່, ນາແພກ, ນາຄຳໃຕ້, ດົງນາຂາມ ດົງກີມ ແລະ ບ້ານ ນານ້ຳທ່ຽງ. | - | 15,000 | 4,000 | 2,000 |
| C6 | ບ້ານໂພສີແກ້ວ ນາຈານ, ນາພັງໂຄກ, ໂພນຍາງ, ໜອງທອນ, ຫ້ວຍ, ດົງຫະກາກ່ ນາເຊນແກ້ວ,ນາແພກ, ນາຫຼັກ, ນາຄຳໃຕ້ ແລະ ບ້ານດົງນາຂາມ. | - | 6,000 | 4,000 | 2,000 |
| C7 | ບ້ານໜອງປາກຊ່ອງ, ພັງໂຮ, ສີວິໄລ , ນານ້ຳທ່ຽງ, ນາໄລໂຄກ ແລະ ບ້ານດົງກີມ. | - | - | 4,000 | 2,000 |
| C8 | ບ້ານນາໄລໂຄກ, ນາໄລ່ດົງ, ໂນນຮັງ, ໂຄກສະຫວ່າງ, ທົ່ວເມືອງ, ຫຼູບໄຊ, ແລະ ບ້ານວັດທະນະສົມບູນ. | - | 5,000 | 4,000 | 2,000 |
| C9 | ບ້ານທົ່ວເມືອງ, ໂພນມີກຂຽນ, ຫຼູມໄຊ ວັດທະນະສົມບູນ, ແຈລະເມືອງ, ປົງນາ ແລະ ບ້ານ ໄລກະທະ. | - | 5,000 | 4,000 | 2,000 |

## ງ. ເຂດປະເມີນລາຄາທີ່ດິນ ຂອງເມືອງພີນ ລະຫັດ D ມີ 15 ເຂດປະເມີນ ແຕ່ (D1-D15)

| | | | | | |
|---|---|---|---|---|---|
| D1 | ບ້ານ ເວີນທົ່ງຄຳ, ປະສົມໄຊ, ພີນ, ນາໂພ, ນາຈານ,ພອນ, ສະກວງ. | 50,000 | 30,000 | 15,000 | 8,000 |
| D2 | ບ້ານນາເປາະ, ເທີມໃໝ່, ໂຄກປຸນ, ນາຂະໜາະ ແລະ ບ້ານໂນນສະ ອາດ. | 40,000 | 15,000 | 10,000 | 8,000 |
| D3 | ບ້ານນາກະທານ, ນາທະລັງ, ໂນນຍາງ ແລະ ບ້ານສະລອຍໃຫຍ່. | 25,000 | 15,000 | 10,000 | 3,000 |
| D4 | ບ້ານວັງບ່ວງ, ອາປອກ, ລະຕຶບ, ຂະໜົມ, ທົບສະໂງມ, ນະສົວ, ບ້ານແກ້ງລະແທ້ງ | 25,000 | 15,000 | 10,000 | 3,000 |
| D5 | ບ້ານດົງບຸເງິນ, ກອຍ ແລະ ບ້ານໂນນໄຊ C17 | 25,000 | 15,000 | 10,000 | 8,000 |
| D6 | ບ້ານຊະນະມີໄຊ, ສິບມະເຂືອງ, ສົງເປືອຍ, ເທີມເກົ່າ, ປະເຫຼັກ ແລະ ບ້ານກາງເກົ່າ | 50,000 | 30,000 | 10,000 | 3,000 |
| D7 | ບ້ານໄຊສົມບູນ, ເຊສະຫວ່າງ, ກະມຸບ, ກາງໃໝ່, ໃໝ່ເລກ9, ຊຸ ດົມໄຊ ແລະ ບ້ານກະປອງ | 25,000 | 15,000 | 10,000 | 6,000 |
| D8 | ບ້ານນາທົມເກົ່າ, ນາໂພຄຳ, ນາ ແຊງຄຳສະອີ ແລະ ບ້ານນາຂະນົງ | 20,000 | 10,000 | 5,000 | 2,000 |
| D9 | ບ້ານສົມສະອາດ, ຫ້ວຍຊາຍ. ພະລອງນາທຸ່ງ, ພະລຸ ແລະ ບ້ານໜອງຫຼວງ | 20,000 | 10,000 | 5,000 | 1,000 |
| D10 | ບ້ານອານຸສົນຍາ, ທະແລໃຕ້, ຂອນແກ່ນ ສະແລໂພນໄຊ, ອາລວຍໃໝ່, ນາທົ່ມ, ໂຄກ, ອາລວຍ, ຄຳມ້ອຍ, ສະແລເໜືອ ແລະ ບ້ານນາທອງ | 30,000 | 15,000 | 5,000 | 1,000 |
| D11 | ບ້ານຕາດໄຮເຊ, ຕາດໄຮໂຄກ, ແກ້ງກອະ, ໂນນໄຊ ແລະ ບ້ານກະແມບເຊ | 15,000 | 10,000 | 8,000 | 1,000 |

| | | | | | |
|---|---|---|---|---|---|
| D12 | ບ້ານໂບນອີໄລ, ທົ່ງມີໄຊ, ນາພົກ, ຫລວງປີດ, ແກະ, ຕົ້ງອາໄລ ແລະ ບ້ານບຶກ. | | | 5,000 | 1,000 |
| D13 | ບ້ານວັງສີແກ້ວ, ປະສິດ, ບາງ, ແກ້ງໄຊ, ອາລີ້ນກີ່, ກະປົງ, ໂພນໄຊ, ໄຜ່, ອາລີໃໝ່ ແລະ ບ້ານປະເຊີບ. | | | 5,000 | 1,000 |
| D14 | ບ້ານໂພນສູງ, ປະໂທງ, ອາປົບ, ສົບບອນ, ແພລອງ (ເຂດ14), ແກ້ງອາເລີ້ງ, ສົ້ມແຫ່ງ ສະວີ ແລະ ບ້ານຫ້ວຍກອນ | | | 5,000 | 1,000 |
| D15 | ບ້ານສະລຸນ, ທຸ່ງຂາມ, ປະອີກ, ແກ້ງສະລັ້ງ, ລະກາຍ, ອາລານ, ນາປ່າງບອນ ປະກອງ ແລະ ບ້ານຫ້ວຍສີ້ງ. | | | 5,000 | 1,000 |
| **ຈ. ເຂດປະເມີນລາຄາທີ່ດິນ ຂອງເມືອງເຊໂປນ ລະຫັດ E ມີ 14 ເຂດປະເມີນແຕ່ (E1 – E14)** | | | | | |
| E1 | ບ້ານວັງອີໄລ, ທ່າໄຂງ, ອຸດົມສຸກ ຂອນມີໄຊ, ນາບໍ່ ແລະ ບ້ານ ໂພນພ້ອງ. | 60,000 | 35,000 | 12,000 | 4,000 |
| E2 | ບ້ານເຊໂປນ, ຫ້ວຍແຈງ, ເມືອງແສນ ແລະ ບ້ານເມືອງຈັນ. | 35,000 | 18,000 | 3,500 | 1,500 |
| E3 | ບ້ານອາໄລ, ອາລາງ, ແກ້ງ, ແກ້ງຫຼວງ, ດົງສະຫວັນ, ປ່າໄລ, ດົງໃຫຍ່ ແລະ ບ້ານລະຄຶມ. | 35,000 | 18.000 | 6,000 | 800 |
| E4 | ບ້ານລະໝຸມ, ວັງບົງ ກາດັບ, ສະກີພິນ ແລະ ບ້ານແກ້ງກີກ. | 30,000 | 18,000 | 6,000 | 800 |
| E5 | ບ້ານແດນສະຫວັນ, ເພີອງ, ຫວ້ຍລານ, ອາລີງ, ກະດຸບນ້ອຍ, ກະດຸບໃຫຍ່, ມະຫາດ, ກະແຫຼງ ແລະ ບ້ານຈຽງ. | 60,000 | 25,000 | 13,000 | 800 |
| E6 | ບ້ານຫ້ວຍຈັງ, ລະໂບກາງ, ໄພໄຊ ແລະ ບ້ານວັງກຸງ. | 35,000 | 13,000 | 6,000 | 800 |
| E7 | ບ້ານສະແກງ, ພະໂລະ, ຫ້ວຍບົງ ແລະ ບ້ານຫ້ວຍຕ້ອນ. | - | 12,000 | 6,000 | 800 |
| E8 | ບ້ານນາຫຼວງ, ມັນຈີ ແລະ ບ້ານແກ້ງກອີ. | - | 60,000 | 17,000 | 1,300 |
| E9 | ບບ້ານແກ້ງຫ້ວປາ, ທ່າແມະ, ນາຫົວນ້ຳ, ແລະ ບ້ານລະອໍ. | - | - | 3,500 | 700 |
| E10 | ບ້ານກະແຫຼງກາງ, ວັງແບງ, ຄູນ ອາຫໍ່, ລະເຕືອງ, ດ່ານເຮືອງ, ສະແລນ, ບ້ານວັງເລີກ. | - | 6,000 | 3,500 | 700 |
| E11 | ບ້ານຕ້າຍ, ຫົວນາ, ຊຽງຮົມ, ລະຫີ້ , ຕະເປືອ, ກົກໝາກ, ລະ ອານ, ລົບ ລະອຸ, ນາ, ສະປອງ, ລະເວີນ, ລຸສະເລຍ, ກ໊ອກ, ກະລາກ, ອາວຽນ, ລະໄກ, ສະດຸນ, ຕະປອງ ແລະ ບ້ານປະຍຸບ. | - | - | 3,500 | 700 |
| E12 | ບ້ານແດວັງ, ວັງໄຂ່, ນາໄທນ, ລາດທໍ່, ນ້ຳໄທນ, ໄໜ່ທ່າແດງ, ແລະ ບ້ານຜາບັງ. | - | 6,000 | 3,500 | 700 |
| E13 | ບ້ານສະເວດ, ບະຍາ, ລາດ | - | - | 4,000 | 700 |
| E14 | ບ້ານໄພນໄຊ, ແກ້ງຄີບ, ສົບມີ ແລະ ບ້ານວັງໝໍ້ທຸມ. | - | 20,000 | 7.000 | 1,000 |
| **ສ. ເຂດປະເມີນລາຄາທີ່ດິນ ຂອງເມືອງນອງ ລະຫັດ F ມີ 10 ເຂດປະເມີນແຕ່ (F1-F10)** | | | | | |
| F1 | ບ້ານນອງວິໄລ | 40,000 | 25,000 | 15,000 | 8,000 |
| F2 | ບ້ານຫີນສະຫວ່າງ,ບຸ່ນຢາງ, ບຸ່ນດົງ ແລະ ບ້ານຕັ້ງອາໄລ | 30,000 | 20,000 | 10,000 | 5,000 |

| | | | | | |
|---|---|---|---|---|---|
| F3 | ບ້ານດົງນາສານ, ນາລຶງເກົ່າ, ນາລຶງໃໝ່ ນາກອງ, ດໍາລອງ, ສະລອຍ ແລະ ບ້ານສາງແຈນ. | 25,000 | 20,000 | 10,000 | 5,000 |
| F4 | ບ້ານສະດີ, ປະລຽງໃຫຍ່, ປຸນຊິເປີງ ແລະ ບ້ານພູນໜາກມີ. | - | 15,000 | 10,000 | 5,000 |
| F5 | ບ້ານຕະກໍ, ໂລະ, ຄຸນສີ, ໄກສອນ , ແກ້ງລຶບ, ປາຈະຕຽນ, ລະເປົານ້ຳ, ຜຸ້ໄທ, ລະເປົາໂຄກ, ປໂຄກ, ແລະ ບ້ານທ່າເທ. | 25,000 - | 20,000 | 10,000 | 5,000 |
| F6 | ບ້ານອາສິງນາ, ອາສິງສາລີ, ອາສິງສະແນະ, ກະແຫຼງພຸ, ອາປອກ, ລະເດີ, ແສເກາະ, ປະເລາະ, ປະລຽງ, ແດນວິໄລ, ໂອ່ຍຕານເຕີບ , ທຸບ ບ້ານປະລຽງນາຍ ແລະ ບ້ານ ຕະກອຍ | 25,000 | 15,000 | 10,000 | 5,000 |
| F7 | ບ້ານລະປິດ, ອາເລົາໃຫຍ່, ນາງບະລາ, ອາເລາກຸນກີ, ປີ້ນ້ຳ, ອາລອຍແລະ ບ້ານລະອຸ. | - | 15,000 | 10,000 | 5,000 |
| F8 | ບ້ານ ຕົ້ງອາໄລ, ລະໄກ້, ປະໂຕ້ນໃຫຍ່, ລະແບງນ້ຳ, ປະແນະ ແລະ ບ້ານຕະປີງ. | 25,000 | 20,000 | 10,000 | 5,000 |
| F9 | ບ້ານສະວີ, ຕະຫຼີງ, ຕະຫຼຸງ, ອາລ່ອງ, ປີ, ຕົງອາໄລນ້ຳ, ຕົງອາໄລເໜືອ, ແສນໃໝ່ ແລະ ບ້ານຕານໂຕຍ. | - | 15,000 | 10,000 | 5,000 |
| F10 | ບ້ານຊອງ,ຊອງຄັນຄາກ, ປະລ່ອຍ, ສະຫຼາງ ແລະ ບ້ານປະເຊຍ. | | 20,000 | 10,000 | 5,000 |

**ຊ. ເຂດປະເມີນລາຄາທີ່ດິນ ຂອງເມືອງທ່າປາງທອງ ລະຫັດ G ມີ 11 ເຂດປະເມີນແຕ່ (G1-G11)**

| | | | | | |
|---|---|---|---|---|---|
| G1 | ບ້ານໂນນຈານ ແລະ ບ້ານທ່າສະລາຄໍາ. | 30,000 | 20,000 | 15,000 | 10,000 |
| G2 | ບ້ານໜອງກົນ, ນາທົວຄວາຍ ແລະ ບ້ານພູແສງຄໍາ. | | 15,000 | 10,000 | 5,000 |
| G3 | ບ້ານແກ້ງແກນ. | - | - | 10,000 | 5,000 |
| G4 | ບ້ານດົງນ້ອຍ, ນາຊີອກ ແລະ ບ້ານນາຫ້ວຍໄຊ່. | 15,000 | - | 10,000 | 5,000 |
| G5 | ບ້ານນາສະໂນ ແລະ ບ້ານແກ້ງປີງ. | - | 15,000 | 10,000 | 5,000 |
| G6 | ບ້ານກຸດຊີ, ຫ້ວຍໜີນ, ບຸດຕະພານ,ທົ່ງປາງ ແລະບ້ານໃໝ່ໄພສີ. | 20,000 | - | 10,000 | 5,000 |
| G7 | ບ້ານນາກຊຸມຄໍາ, ບ້ານນາຖ້ຳໝູ, ທ່າພີ. ດອນຂາວແລະ ບ້ານນາຕົງ. | - | 13,000 | 8,000 | 3,000 |
| G8 | ບ້ານໂນນສະຫວ່າງ,ເມືອງຄໍາ,ຫີນຕັ້ງໂຄກ ແລະ ບ້ານຫີນຕັ້ງກາງ. | - | 13,000 | 8,000 | 3,000 |
| G9 | ບ້ານໂນນສີວິໄລ, ນາພະນຽດ, ແກ້ງສະກຸ ນາເຜິກ, ນາປີງ ແລະ ບ້ານນາທະມານ. | - | 13,00 | 8,000 | 3,000 |
| G10 | ບ້ານເຊປ່ອງ, ລະວາງໃຫຍ່, ປະດ່ອງ, ປະດອງໂນນ ຫ້ວຍໄຊ່ ແລະ ບ້ານ ນາຈັນທາງ. | - | 13,000 | 8,000 | 3,000 |
| G11 | ບ້ານພູພາບາງ, ນາເລົາ, ອາທໍ, ເຊກີ, ໄຊສົມບູນ, ແດນສະຕົງ, ນາປ່າຊາດ, ແດນ-ແກະ-ນະຈຸ ແລະ ບ້ານແກ້ງພູມາລີ. | 15,000 | 10,000 | 5,000 | 3,000 |

## ຍ. ເຂດປະເມີນລາຄາທີ່ດິນ ຂອງເມືອງສອງຄອນ ລະຫັດ H ມີ 16 ເຂດປະເມີນ ແຕ່ (H1 – H16)

| | | | | | |
|---|---|---|---|---|---|
| H1 | ບ້ານນາຄຳປົ່ນ,ຫລັກເມືອງ, ນອນອີໄລ, ປາກ ຊ່ອງ, ສາລາຄຳ, ລັດ ຕະນະລາຊີ ແລະບ້ານທົ່ງສີເມືອງ. | 120,000 | 70,000 | 35,000 | 10,000 |
| H2 | ບ້ານ ມະໄລທອງ, ໂນນຝາຍ ແລະ ບ້ານໜອງບໍ່. | 80,000 | - | 15,000 | 5,000 |
| H3 | ບ້ານມະໄລທອງ, ໂນນຝາຍ ແລະ ບ້ານໂຊກໄຊ. | - | 40,000 | 15,000 | 5,000 |
| H4 | ບ້ານ ໂນນສົມບູນ, ໂນນຊົມພູ, ນາກາລາ, ໜອງ ໄຮ ແລະ ບ້ານ ມ່ວງໄຂ່. | 80,000 | 30,000 | 10,000 | 5,000 |
| H5 | ບ້ານໜອງບໍ່ ແລະ ບ້ານທົ່ງສີເມືອງ. | - | 30,000 | 15,000 | 5,000 |
| H6 | ບ້ານໃຫມ່ໜອງຫວ້າ, ນາພອກ, ນາ ທອບປັງ, ນາໜອງຜື, ນາຫວ້າ, ນາຟອງ ກື້ອ ຄຶມສະ ຫວ່າງ, ນາດູ່ ແລະ ບ້ານ ນາຈານ | - | 20,000 | 15,000 | 3,000 |
| H7 | ບ້ານໜອງເມັກ, ແກ້ງຫີນແກ້ວ, ລາດນາດີ, ນາດູ, ໂຄກສະອາດ, ຫີນກອງ ແລະ ບ້ານໃຫ່ມໜອງຫວ້າ. | - | 20,000 | 15,000 | 3,000 |
| H8 | ບ້ານນາບຸ່ງ, ໜອງແດງ, ໜອງອີເຫລືອງ, ນາປົ່ງ, ຄຶມສະຫວ່າງ, ນາຟອງກື້ອ, ນາຟອງທ່າ, ໜອງ ບົວທ່າ, ນາໂພ, ສະບຸໄຊ, ທ່າເດື່ອ, ໜອງເດີນທາ, ທ່າປະຊຸມ ແລະ ບ້ານໜອງວັດ. | - | 25,000 | 15,000 | 5,000 |
| H9 | ບ້ານນາໄດ, ທ່າແພ, ນາດົງ, ເປືອຍຂາວ, ດົກຂະ, ຫີນກອງ, ນາລານ, ນາແສນເທບ ແລະ ບ້ານໂນນສຳລານ. | - | 15,000 | 10,000 | 3,000 |
| H10 | ບ້ານໜອງກົນບຸ,ສາລາລ້ຽວໂນນຄຳສຸງ, ໂນນສະຫວ່າງ, ແກ້ງໂດນ, ຄຶມມ່ວນ ແລະ ບ້ານຫົວຕາດ. | 70,000 | 25,000 | 10,000 | 3,000 |
| H11 | ບ້ານໜອງເດີນທົ່ງ, ວິໄຊສິງ, ດົງສະຫວ່າງ, ສິງທາ ແລະ ບ້ານສອງຄອນ. | - | 15,000 | 10,000 | 3,000 |
| H12 | ບ້ານແບ່ງຄຳໄຫຼ, ລະຫານ້ຳ, ທ່າຂາມລຽນ, ລະຫາ ໂຄກ, ກຸດຊີ, ມ່ວງໄຂ່ ແລະ ບ້ານ ໂຊກໄຊ. | - | 25,000 | 15,000 | 5,000 |
| H13 | ບ້ານໂນນເຕົ່າກຸ່ານ, ໜີປັ້ງມ, ແກ້ງຕະງານ, ເຊບັ້ງ ຕຽງ, ໜອງຂອນ, ນາອຸດົມ, ໂຄກ ກອງ ແລະ ບ້ານຫີນຄອກ. | 70,000 | 15,000 | 10,000 | 3,000 |
| H14 | ບ້ານດອນຫວາຍ, ດອນຊາດ, ນາຄະນອມ, ເຊບັ້ງນວນ, ດ່ານສະຫວາງ, ນາຮັງແຮ້, ດອນໃຫ່ຍ, ຫລັກ 11 ແລະ ບ້ານດ່ານແດັງ. | 70,000 | 20,000 | 10,000 | 3,000 |
| H15 | ບ້ານ ຫ້ວຍຄໍ້, ຫ້ວຍໄຂ, ນາກະຫລັງ, ດອນຂຽວ, ດອນມ່ວງ, ຊະແບກ, ນາຊະ ໄນ, ພະແລງ ແລະ ບ້ານນາຫົ້ງ. | - | 10,000 | 8,000 | 2,000 |
| H16 | ບ້ານອຸມໝາມກອງ ແລະ ບ້ານໜອງ ນົກຂຽນ. | 70,000 | 20,000 | 10,000 | 3,000 |

## ດ. ເຂດປະເມີນລາຄາທີ່ດິນ ຂອງເມືອງຈຳພອນ ລະຫັດ I ມີ 13 ເຂດປະເມີນ ແຕ່ (I1-I13)

| | | | | | |
|---|---|---|---|---|---|
| I1 | ບ້ານດົງນາກອຍ, ດົງໜອງຂຸ່ນ, ຫົວເມືອງ, ແກ້ງກອກທົ່ງ, ແກ້ງກອກເໜືອ, ແກ້ງກອກກາງ ແລະ ບ້ານແກ້ງກອກດົງ. | 50,000 | 35,000 | 25,000 | 5,000 |
| I2 | ບ້ານນາຄູ, ເຂົາກາດ, ແກ້ງກອກທົ່ງ, ແກ້ງກອກກາງ, ແກ້ງກອກດົງ ແລະ ບ້ານດົງຄຳຫື່ນ. | 45,000 | 30,000 | 15,000 | 4,000 |
| I3 | ບ້ານນາຄູ, ພະແລງ, ສີທອງ, ດອນແຍງ, ແກ້ງບຸ່ນ, ຂ້ານເຖົ້າ, ດົງມອນ, ໂນນສີທັນ ແລະ ບ້ານ ດົງດອກໄມ້. | - | 30,000 | 10,000 | 4,000 |
| I4 | ບ້ານນາເຕີຍ, ໃຜ່, ຫລັກ 35, ເຂົາ ກາດ, ໜອງແວງ, ນາສານ ແລະ ບ້ານ ຄຳນ້ອຍ. | 45,000 | 25,000 | 8,000 | 3,500 |
| I5 | ບ້ານຄຳນ້ອຍ, ໜອງແວງ, ໜອງທົ່ງ, ດົງດົນຄູ, ຄໍດົງດອກໄມ້, ຂ້ານເຖົ້າ, ສີທອງ ແລະ ບ້ານນາຄູ. | - | 20,000 | 7,000 | 3,000 |
| I6 | ບ້ານຫລັກ 35. | 60,000 | | 10,000 | 3,500 |
| I7 | ບ້ານຫ້ວຍຍາງ, ສີວິໄລ, ຫຼັກ35, ຂອນແຕ້ ແລະ ບ້ານໜອງເປັດ | 45,000 | - | 8,000 | 3,000 |
| I8 | ບບ້ານໜອງເປັດ, ຂອນແຕ້, ສີວິໄລ, ຫຼັກ 35, ດົງດົນຄູ, ໜອງທົ່ງ, ນາບົກຂຽນ, ໜອງກະລອງ, ຄຳແຄນ, ບ້ານຢາງສູງ. | - | 15,000 | 7,000 | 3,000 |
| I9 | ບ້ານໂພນທອງ, ດົງດອກໄມ້, ບຶກທົ່ງ, ດອນແຍງ, ຊະຄືນເໜືອ, ທ່າມ່ວງ, ທ່າເມືອງ, ດົງເມືອງ, ແສນດົງໝາກກໍ່, ບຶງຕາຫລຽງ, ໜອງຫຍ້າມ້າ, ສີບຸນເຮືອງ, ໂພນມ່ວງ, ໂພນໂດກ, ໂນນຄູນ, ພານຂອງ ໂພນສະອາດ, ວັດຕະນາ, ໂຄກແລ້ງ, ໄຜ່ລ້ອມ, ບຶກດົງ, ຄຳແຄນ, ຢາງສູງ, ໂນນຮັງ , ເຫຼົ່າສຸລິບະ, ໜອງໄຮ, ນາເຊືອກ, ກຸດບອນ,ມ່ວງໄຂ່, ພັງເຮັງ, ໂນນສູງ ແລະ ບ້ານໂພນຕາດ. | - | 10,000 | 7,000 | 3,000 |
| I10 | ບ້ານໂນນວິໄລວັນ, ແກ້ງກອກເໜືອ, ແກ້ງກອກກາງ, ແກ້ງກອກດົງ, ຕະແຫຼວ, ນາກະທ້າງ, ຄຳປ່າແໜ, ປ່າກ້ອຍ, ກະຫຼາງໃຕ້, ກະຫຼາງ ເໜືອ, ບຶກກົກ, ດົງຕະແບງ, ນາຂາມ, ທວດ, ນາໄຮ່ດຽວ, ວັງເມົາ, ເພຍກ່າ ແລະ ບ້ານລຳບອງ. . | 15,000 | 10,000 | 5,000 | 3,000 |
| I11 | ບ້ານນາໄຮ່ດຽວ, ຄຳຕ່ອງລ່ອງ, ຫ້ວຍໝາກເຍົາ, ທວດ, ໜອງກະ ໂດກ, ລຳເຫນ, ເຊ ແລະ ບ້ານລຳຈັນ. | - | 15,000 | 5,000 | 3,000 |
| I12 | ບ້ານຕະແຫຼວ,ຕະແຫຼວນ້ອຍ, ຄຳປ່າແໜ, ນາຕ້າຍ, ດອນແດງ, ແກ້ງກອກດົງ ແລະ ບ້ານກະດານ.. | 20,000 | 15,000 | 4,000 | 3,000 |
| I13 | ບ້ານນາສານ, ບາກ, ເຂົາກາດ, ດົງກວາງໂດນ, ກະດານ, ເລົ່າໝາກຄ່າ, ຫົວນ້ຳສ້າງ, ຫ້ວຍຊາຍ, ບັກ, ຕານສຸມ, ດອນເດັ່ງ, ຄຳສີດາ, ເຫຼົ່າຫົວຄຳ,ເຫຼົ່ານາດ, ບ້ານໜອງອີ່ງ. | 35,000 | 20,000 | 8,000 | 3,000 |

## ຕ. ເຂດປະເມີນລາຄາທີ່ດິນ ຂອງເມືອງ ຊົນນະບູລີ ລະຫັດ J ມີ 13 ເຂດປະເມີນ ແຕ່ (J1-J11)

| | | | | | |
|---|---|---|---|---|---|
| J1 | ບ້ານ ໂນນສະຫວ່າງ ແລະ ບ້ານ ຄຳປະແໜ | 30,000 | 20,000 | 15,000 | 5,000 |
| J2 | ບ້ານໂນນຄູ້, ດຸ່ມແຍ, ນາໜອງຜຳ ແລະ ບ້ານດົງບຸນ. | 20,000 | 15,000 | 10,000 | 3,000 |
| J3 | ບ້ານນາບົງ, ໂນນຮັ່ງມີ, ໜອງເບັນ ແລະ ບ້ານນາຫວ້າສີນໄຊ. | - | 7,000 | 4,000 | 2,000 |

| | | | | | |
|---|---|---|---|---|---|
| J4 | ບ້ານໄຊວົງທີລາດ, ປະຕົງ, ຄຳປອງ ແລະ ບ້ານເຊວັນ. | 15,000 | 10,000 | 2,000 | 2,000 |
| J5 | ບ້ານຊຽງຍືນ, ປົງຊ້າງ, ກອງປະທຸມວັນ, ໂພໄຊຄູນ, ແສງຈະເລີນ, ໜອງຜື, ດົງນາງາມ,ບດົງທົງຄຳ, ໄຊສົມບູນ, ໂຄກຫົວຊ້າງ , ດົງຫວາຍທ່າຄຳເຫຼື້ອມ ແລະ ບ້ານດອງມາລາ. | 20,000 | 15,000 | 8,000 | 2,000 |
| J6 | ບ້ານໂນນຍາງ, ນາໂພນທອງ, ໂພນຕານ, ໜອງບົວຫຼວງ ແລະ ບ້ານດອນຍາໂນງ. | - | 10,000 | 5,000 | 2,000 |
| J7 | ບ້ານວັງໂຄນຄຳ, ນາເພງ, ຮ່ຳພາວັງ, ກະເປົາ, ເກືອຄຳດີ, ອະທໍ ແລະ ບ້ານວິໄຊ. | 15,000 | - | 5,000 | 2,000 |
| J8 | ບ້ານໜອງບົວລາວ ແລະ ບ້ານດົງມີດ. | 20,000 | 10,000 | 5,000 | 2,000 |
| J9 | ບ້ານລຳຫວາຍ, ຕົ້ງຫວາຍໂຄກ , ນາທອງ , ປົ່ງ, ອາລາງ ແລະ ບ້ານແກ້ງຫຼີ. | - | 15,000 | 8,000 | 2,000 |
| J10 | ບ້ານຕົ້ງຫວາຍນ້ຳ, ກະລົມວັງແຂ້ , ໜອງສົມ, ດົງໜອງແຄນ, ເມືອງໂຮງ, ໜອງສອງຫ້ອງ, ສະໜາມໄຊ , ລຳບຽດ, ກະທອງເຊ ແລະ ບ້ານນາຈານໃຫຍ່. | - | 10,000 | 5,000 | 1,000 |
| J11 | ບ້ານປະລຽງ, ດົງອາລາງ, ນາສະໂນ, ປົງເຊຕາມອກ, ນາໄຊ ແລະ ບ້ານນາລາແອມ. | - | - | 5,000 | 1,000 |

## ຖ. ເຂດປະເມີນລາຄາທີ່ດິນ ຂອງເມືອງໄຊບູລີ ລະຫັດ K ມີ 15 ເຂດປະເມີນແຕ່ (K1 - K15)

| | | | | | |
|---|---|---|---|---|---|
| K1 | ບ້ານເກືອເຂົາກາ, ນາແດງ,ນາບ່ອງ,ມະນີລາດ,ກາງ,ນາສອນ, ຍາງຄ້ຳ, ເລົ່າຝ້າຍ ແລະ ບ້ານ ແກ້ງແຄດ. | 70,000 | 55,000 | 40,000 | 25,000 |
| K2 | ບ້ານໜອງສະພັງ ແລະ ບ້ານຜັກຂະຫຍ່າ. | 60,000 | 50,000 | 40,000 | 23,000 |
| K3 | ບ້ານແກ້ງກະເບົາເໜືອ, ແກ້ງກະ ເບົາໃຕ້, ດົງພຸງ ແລະ ບ້ານ ສີວິໄລ. | 55,000 | 45,000 | 38,000 | 20,000 |
| K4 | ບ້ານທ່າຄໍ້, ປາກເຊບັ້ງໄຟ, ນາສັງ ແລະ ບ້ານບົວໄຂ | 50,000 | 40,000 | 35,000 | 20,000 |
| K5 | ບ້ານຕົ້ນແຫນ, ເວີນເໜືອ ແລະ ບ້ານເວີນໃຕ້ | - | 40,000 | 35,000 | 20,000 |
| K6 | ບ້ານນາວເໜືອ, ນາວໃຕ້, ດົງພ້າວ, ດົງພູ້, ນາສອນ ແລະ ບ້ານ ບາງຄ້ຳ | - | 40,000 | 36,000 | 18,000 |
| K7 | ບ້ານນາເທົງ, ແກ້ງກະເບົາໃຕ້ ແລະ ບ້ານສະຫວ່າງ | - | 40,000 | 35,000 | 18,000 |
| K8 | ບ້ານສີໃຄ, ກາງ ແລະ ບ້ານດົງສະຫວັນ. | - | 40,000 | 35,000 | 18,000 |
| K9 | ບ້ານທ່າຂາມ ແລະ ບ້ານຄຳໂບນສູງ. | - | 45,000 | 38,000 | 20,000 |
| K10 | ບ້ານໜອງເຮືອງທອງ , ນາຊຽງຄານ, ຫ້ວຍແຮ່ ແລະ ບ້ານສີມສະອາດ. | - | 40,000 | 35,000 | 16,000 |
| K11 | ບ້ານຜັກເພື້ອ, ສະກອງ, ແກ້ງໂພສີ, ກ້າງປາ , ດົງຍາງ ແລະ ບ້ານ ດົງພູ້. | - | 38,000 | 33,000 | 16,000 |
| K12 | ບ້ານໂພນທັນ, ຫາດຊາຍສູງ ແລະ ບ້ານປົງເຊ. | - | 38,000 | 30,000 | 16,000 |
| K13 | ບ້ານປ່າໄລ່, ດົງໝາກໄຟ, ແກ້ງແວງ ແລະ ບ້ານຊຽງໃຄ. | - | 35,000 | 30,000 | 25,000 |
| K14 | ບ້ານດົງໂພວັນ, ນາເຮືອງ, ໜອງຊຽງເຫຼືອງ , ດົງໝາກໄພ, ນາບ່ອງ , ກະຈຸ, ແກ້ງແຄດ ແລະ ບ້ານເລົ່າຝ້າຍ. | - | 35,000 | 30,000 | 20,000 |
| K15 | ບ້ານພູແກະ ແລະ ບ້ານໜອງແວງ. | - | 30,000 | 25,000 | 16,000 |

## ທ. ເຂດປະເມີນລາຄາທີ່ດິນ ຂອງເມືອງວິລະບູລີ ລະຫັດ L ມີ 13 ເຂດປະເມີນ ແຕ່ (L1 – L13)

| | | | | | |
|---|---|---|---|---|---|
| L1 | ບ້ານບຸ່ງຄ່າ. | 50,000 | 35,000 | 25,000 | 8,000 |
| L2 | ບ້ານປະຄົງ, ໂພນສີມບູນ, ໜອງກະແດ້ງ, ນໍ້າຕົບ, ວັງຍາງ ແລະ ບ້ານສົບກົງ. | 35,000 | 25,000 | 15,000 | 3,000 |
| L3 | ບ້ານແກ້ງສົບປາ, (ແກ້ງເຄົາ,ໂພນສູງ) ແກ້ງເຫຼັກໄຕ້, ແກ້ງຫຼວງ ແລະ ບ້ານທາຂະຍະ. | 25,000 | 20,000 | 10,000 | 3,000 |
| L4 | ບ້ານຫ້ວຍຊ້ວານ, ນໍ້າຄົບ, ໄຜ່ນໍ້າແມງ, ໂພນຊົມພູ, ນາເທນເຫັຍ, ນາກະຈັບ ແລະ ບ້ານນາບໍ້າສົ້ງ. | 25,000 | 25,000 | 10,000 | 3,000 |
| L5 | ບ້ານເຫຼົ່າຫຼວງ, ນາຊູ, ນາແຂະ, ນາບົມ, ທາດ, ນາເຕີ, ຜາບັ້ລາງ, ໄຮ ແລະ ບ້ານດົງບັງ. | - | 20,000 | 10,000 | 2,000 |
| L6 | ບ້ານນາຊຽງແລ, ນາໂພ, ນາເມືອງແສນ, ນາແກ, ເຫຼົ່າທ່າ, ຂີວງະ , ກົກຕ້ອງ, ນາມິນ ແລະ ບ້ານໜອງກະປາງ. | - | 20,000 | 10,000 | 2,000 |
| L7 | ບ້ານນາບາລູ, ນາຂາງ ແລະ ບ້ານນໍ້າແຂບ. | - | 20,000 | 10,000 | 3,000 |
| L8 | ບ້ານບຸ່ງບໍ່, ດົງຍາງ, ນາຜາດ່າງ, ໂພນສະຫວ່າງ, ກະແດບ, ສົມສະນຸກ, ໂພນສໍາລານ ແລະ ບ້ານນາກະພຸງ. | - | 20,000 | 10,000 | 3,000 |
| L9 | ບ້ານເມືອງຫຼວງ, ແກ້ງເກົາ, ນາກະຊິນ, ນາຫອຍ ແລະ ບ້ານວັງທ່າຄວາຍ. | - | 20,000 | 10,000 | 3,000 |
| L10 | ບ້ານກົກໜາກ, ນໍ້າປະເດບ, ແກ້ງເຫຼັກເໜືອ, ທົ່ງຫຼວງ ແລະ ບ້ານຫ້ວຍຫອງ. | - | 15,000 | 8,000 | 2,000 |
| L11 | ບ້ານນໍ້າບາ, ນໍ້າຈະໄລະ, ນໍ້າພະຊີ, ວັງຊັງ ແລະ ບ້ານຊ້າງຄໍາ. | - | 15,000 | 8,000 | 2,000 |
| L12 | ບ້ານສົບສະດຸງ, ສະເລາະເໜືອ ແລະ ບ້ານກະຫຼາຍ. | - | 5,000 | 3,000 | 1,000 |
| L13 | ບ້ານໄຊປະລາດ, ແກ້ວອີໄລ, ຊີດົງ , ນາສະເລາະ ແລະ ບ້ານປ່າຜັກເນົ່າ. | 25,000 | 15,000 | 8,000 | 2,000 |

## ນ. ເຂດປະເມີນລາຄາທີ່ດິນ ຂອງເມືອງອາດສະພອນ ລະຫັດ M ມີ 8 ເຂດປະເມີນແຕ່ (M1-M8)

| | | | | | |
|---|---|---|---|---|---|
| M1 | ບ້ານທາດດອກແກ້ວ. | 30,000 | 18,000 | 16,000 | 6,000 |
| M2 | ບ້ານນາກຸດຈານ, ຜັກຂະຫຍ່າ, ທາດດອກແກ້ວ, ໜອງເດີນ, ນາຊັງນ້ອຍ, ນາມິນ, ນາວັງມົບ, ດົງນາງາມ, ດົງທາດາ, ກຸດນໍ້າແລ້ງ, ແລະ ບ້ານດົງຫວາຍດົມ. | 15,000 | 9,000 | 6,000 | 2,000 |
| M3 | ບ້ານນາເກືອ, ນາເຂົ້າມົ້ນ, ຫີນສົ່ວ,ນາໝາກເກືອ, ໂພນດູມ, ໂພໄຊ, ໂພນບາດີ, ໂພນງາມ,ໂພນແພງ, ນາກະທິງ, ຜັກກະດາ, ບັງ, ທາດດອກແກ້ວ, ບ້ານໜອງບົວ. | 20,000 | 9,000 | 6,000 | 2,000 |
| M4 | ບ້ານໜອງບົວ, ກຸດຊີງ, ສົມໄຊງ, ກຸດຫີນ, ໄຊໂພນສິມ, ນາປອດ, ຜັກຂະຫຍ່າ, ກຸດແຄນ,ສອງຫ້ອງ ແລະ ບ້ານນາຊັງນ້ອຍ. | - | 11,000 | 6,000 | 1,000 |
| M5 | ບ້ານໂພນດູມ, ໂພໄຊ, ຊຽງອ້ວນ, ກຸດຊີງ, ນາກະທິງ, ຜັກກະດາ, ຕາດຂາແດງ, ດອນກະພຸ້ງ, ດອນກອງ, ກົກແດງ, ນາແຄ, ໂພນບາງ ກາງດົ້ວ, ນານ້ອຍ, ບັງແບດເຊ, ຄໍາພູ, ດົງຄໍາກວານ, ບ້ານນາໝາກເກືອ. | 20,000 | 9,000 | 6,000 | 1,000 |

| | | | | | |
|---|---|---|---|---|---|
| M6 | ບ້ານນາປາຄາ, ຈອມຮາດ, ດົງຂັນຄໍາ, ຫ້ວຍງົວຄໍາ, ນາຂາມ, ນາເລົ່າ, ວຽງໄຊ, ນາກະປົງ, ນາມີນ, ກຸດຫີນ, ກຸດບ້ານເລັ່ງ ແລະ ບ້ານ ດົ້ນໂພສີ. | - | 7,500 | 4,000 | 1,000 |
| M7 | ບ້ານນາທົ່ມ, ສີງສະຫວ່າງ, ຫ້ວຍເດື່ອ, ດົງຫວາຍ, ນາວັງມີນ, ບ້ານ ນາມີນ. | - | 7,500 | 4,000 | 1,000 |
| M8 | ບ້ານໂດກກະຕ່າຍ, ພອນສະຫວັນ, ດົງສານ, ແກ້ງແດງ, ຫ້ວຍຍາງ, ແກ້ງມີ່ນ, ໂພນປົກ ແລະ ບ້ານສີບເຊ. | 20,000 | 7,500 | 4,000 | 1,000 |

## ບ. ເຂດປະເມີນລາຄາທີ່ດິນ ຂອງເມືອງໄຊພູທອງ ລະຫັດ N ມີ 14 ເຂດປະເມີນ ແຕ່ (N1 – N14)

| | | | | | |
|---|---|---|---|---|---|
| N1 | ບ້ານທ່າດ່ານ , ດອນຫວາຍ ແລະ ບ້ານນາພານ. | 70,000 | 55,000 | 45,000 | 40,000 |
| N2 | ບ້ານປຸ່ງນາດີ, ທີອທາດ, ສີມສະອາດ ແລະ ບ້ານທ່າໂພ. | 70,000 | 55,000 | 45,000 | 40,000 |
| N3 | ບ້ານສີມສະອາດ, ຄໍາແຮ້ງ, ນ້ຳພຸ, ດົງໂພສີ, ນາໂດນ, ຂີວດໍາ, ແລະ ບ້ານຄໍາຊຸ້ມ. | - | 55,000 | 45,000 | 40,000 |
| N4 | ບ້ານຂີວດ ‾ ແລະ ບ້ານຄໍາຊຸ້ມ. | 90,000 | 55,000 | 45,000 | 40,000 |
| N5 | ບ້ານ ມ່ວງໄຂ່, ນ້ຳພຸ, ດົງໂພສີ ແລະ ບ້ານດົງໝາກໄຟ. | 70,000 | 55,000 | 45,000 | 40,000 |
| N6 | ບ້ານດອນດູນ, ດົງໝາກໄຟ ສີສະຫວ່າງເໜືອ, ແລະ ບ້ານໂພນທາດ. | - | 55,000 | 45,000 | 40,000 |
| N7 | ບ້ານດົງໝາກໄຟ ແລະ ສີສະຫວ່າງເໜືອ. | 90,000 | 55,000 | 45,000 | 40,000 |
| N8 | ບ້ານພູມມະເຈດີ, ໂພນທາດ, ນາຄໍາ, ນາລະໂອງ ແລະ ໂພສີແກ້ວ | 70,000 | 55,000 | 45,000 | 40,000 |
| N9 | ບ້ານນາໝາກເກືອ, ໂພນສົ້ມໂຮງ ແລະ ບ້ານຕາກແດດ. | - | 55,000 | 45,000 | 40,000 |
| N10 | ບ້ານຄັນນາຈານ, ເວີນດູນ ແລະ ບ້ານເຫຼົ່າໝາກຫູດ | 70,000 | 55,000 | 45,000 | 40,000 |
| N11 | ບ້ານໂພນທັນ, ຫ້ວຍຂະໜອງ ແລະ ບ້ານຄໍາແສນໄຊ (ຄຸ້ມໜອງກຸງ). | - | 55,000 | 45,000 | 40,000 |
| N12 | ບ້ານໂພສີແກ້ວ, ນາລະໂອງ ແລະ ບ້ານຄໍາແສນໄຊ. | 90,000 | 55,000 | 45,000 | 40,000 |
| N13 | ບ້ານຫ້ວຍມ່ວງ, ດົງດອກໄມ້ ແລະ ບ້ານເຮືອນຫີນ. | 70,000 | 55,000 | 45,000 | 40,000 |
| N14 | ບ້ານນາບໍ່,ນາໂມງ ແລະ ບ້ານສີສະຫວ່າງໃຕ້ | - | 55,000 | 45,000 | 40,000 |

## ປ. ເຂດປະເມີນລາຄາທີ່ດິນ ຂອງເມືອງພະລານໄຊ ລະຫັດ O ມີ 11 ເຂດປະເມີນ (O1-O11)

| | | | | | |
|---|---|---|---|---|---|
| O1 | ບ້ານຫົວເມືອງ, ໂພນດານ, ໂພໄຊ ,ພະນົມ , ພະລານເໜືອ, ນາໝາກມີ ແລະ ບ້ານພະລານໃຕ້. | 40,000 | 20,000 | 10,000 | 5,000 |
| O2 | ບ້ານຫົວເມືອງ, ໂພນດານ, ໂພສີ ແລະ ບ້ານໂນນມີໄຊ. | 30,000 | 10,000 | 5,000 | 3,000 |
| O3 | ບ້ານພະລານໃຕ້, ອຸດົມໄຊ, ເຫຼົ່າຫຼວງ ແລະ ບ້ານກະຫຼອງເໜືອ. | 30,000 | 10,000 | 5,000 | 3,000 |
| O4 | ບ້ານຊ່າງແສງ, ເຫຼົ່າຫຼວງ, ອຸດົມໄຊ , ກະຫຼອງເໜືອ ແລະ ບ້ານນາຫູ້ໃໝ່. | 30,000 | 8,000 | 5,000 | 3,000 |
| O5 | ບ້ານໂພສີ, ໂນນມີໄຊ, ດົງບັງ ແລະ ບ້ານໂທະ. | 20,000 | 8,000 | 5,000 | 3,000 |

| | | | | | |
|---|---|---|---|---|---|
| 06 | ບ້ານຫົວເມືອງ, ໂພນ[illegible] ນາກີ, ໂພສີ, ນາໂພວັດ, ນາໂພສີ[illegible], [illegible] ແອງ, ບຶງທະເລ,ນາກາງເຊ, ນາກາງທົ່ງ ແລະ ບ້ານນາຊາ. | - | 8,000 | 5,000 | 2,000 |
| 07 | ບ້ານນາກາງເຊ, ນາກາງທົ່ງ, ນາຊາ, ແກ້ງໄຊນ້ອຍ, ດອນຄືວ, ນາຊຸ, ໂພນມີໄຊ, ໂພະ ແລະ ບ້ານລະຫຸນ. | - | 8,000 | 5,000 | 2,000 |
| 08 | ບ້ານຊ່າງແສງ, ເຫຼົ່າຫຼວງ, ອຸດົມໄຊ, ນາຫນາກມີ, ພະລານໃຕ້, ບຶງທະເລ, ນາກາງເຊ, ແກ້ງໄຊນ້ອຍ, ນາຂ່ອງ, ກະຫຼອງເໜືອ ແລະ ບ້ານກະລອງໃຕ້. | - | 8,000 | 5,000 | 2,000 |
| 09 | ບ້ານບຶງທະເລ, ນາກາງເຊ, ແກ້ງໄຊໃຫຍ ແລະ ບ້ານນາຂ່ອງ. | - | 6,000 | 5,000 | 2,000 |
| 010 | ບ້ານແກ້ງພາມ, ຊ່າງແສງ, ເຫຼົ່າຫຼວງ, ອຸດົມໄຊ, ນາຫຸ້ໃຫຍ່, ໂພນ ,ນາຊະດຸ, ນາຈັນໃຕ້, ຫີນແຕກ , ນາທ່ອນ, ນາຂົ້ນໄດ, ຊຽງແລນ້ຳ, ກະລຶກເໜືອ, ກະແສນ, ຫຼັກໄຊ, ນາຫຸ້ໃໝ່, ພະນົມໄຊ, ໂພໄຊ, ຫົວເມືອງ, ໂພສີ, ຊຽງແລໃຕ , ນາລາຍ, ເທີມນ້ອຍ, ເທີມໃຫຍ່ແກ້ງຈີບ, ອັ່ງໂດນ, ນາບໍ່ເໜືອ, ນາກະປົງ, ໜອງຜື, ດອນ, ນາມ່ວງ, ກະແສນ, ໂພນບົກ, ບ້ານນາມ່ວງ. | - | 6,000 | 3,000 | 1,000 |
| 011 | ບ້ານດອນ, ໜອງຜື, ກະລຶກເໜືອ ,ຊຽງແລນ້ຳ, ນາຈັນໃຕ້, ຫີນແຕກ ແລະ ບ້ານຫຼັກໄຊ. | - | 6,000 | 3,000 | 1,000 |

**ມາດຕາ 10 (ປັບປຸງ) ກຳນົດອັດຕາສ່ວນຫຼຸດ ສຳລັບເນື້ອທີ່ດິນ ແລະ ລາຄາສິ່ງປຸກສ້າງ**

**1 ການກຳນົດອັດຕາສ່ວນຫຼຸດສຳລັບເນື້ອທີ່ດິນ**

ສຳລັບການກຳນົດອັດຕາສ່ວນຫຼຸດເນື້ອທີ່ດິນ ແມ່ນໄດ້ກຳນົດໃນຂໍ້ທີ 3 ໝວດທີ 6 ຂອງຄຳແນະນຳວ່າດ້ວຍການປະເມີນລາຄາທີ່ດິນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 0040/ກຊສ, ລົງວັນທີ 12 ມັງກອນ 2023.

| **ເນື້ອທີ່ (ຕາແມັດ)** | **ອັດຕາສ່ວຍຮ້ອຍ (%)** |
|---|---|
| ເນື້ອທີ່ດິນບໍ່ເກີນ 1,600 ຕາແມັດ; | 100 |
| ເນື້ອທີ່ດິນເກີນແຕ່ 1,601 ຕາແມັດ ຫາ 4,000 ຕາແມັດ; | 85 |
| ເນື້ອທີ່ດິນເກີນແຕ່ 4,001 ຕາແມັດ ຫາ 8,000 ຕາແມັດ; | 75 |
| ເນື້ອທີ່ດິນເກີນແຕ່ 8,001 ຕາແມັດ ຫາ 12,000 ຕາແມັດ; | 65 |
| ເນື້ອທີ່ດິນເກີນແຕ່ 12,001 ຕາແມັດ ຂຶ້ນໄປ. | 55 |

**2 ການກຳນົດອັດຕາສ່ວນຫຼຸດລາຄາສິ່ງປຸກສ້າງ**

ສຳລັບການກຳນົດລາຄາຂອງສິ່ງປຸກສ້າງ, ປະເພດສິ່ງປຸກສ້າງ, ຫົວໜ່ວຍ, ອາຍຸສິ່ງປຸກສ້າງ (ລາຄາຫົວໜ່ວຍ/ກີບ) ແມ່ນໄດ້ກຳນົດຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ສະບັບເລກທີ 69/ນຍ, ລົງວັນທີ 05 ສິງຫາ 2010 ແລະ ຂໍ້ຕົກລົງຂອງລັດຖະມົນຕີ ກ່ຽວກັບລາຄາຫົວໜ່ວຍກໍ່ສ້າງ ເຄຫາສະຖານ ສະບັບເລກທີ 2123/ຍທຂ, ລົງວັນທີ 17 ທັນວາ 2021.

| ປະເພດສິ່ງປຸກສ້າງ | ຫົວໜ່ວຍ | ອາຍຸສິ່ງປຸກສ້າງ ( ລາຄາຫົວໜ່ວຍ / ກີບ ) | | |
|---|---|---|---|---|
| | | 10 ປີລົງມາ | 10-20 ປີ | 20 ປີຂຶ້ນໄປ |
| | | ລາຄາໃໝ່ | ລາຄາໃໝ່ | ລາຄາໃໝ່ |
| ເຮືອນແບບຊົງລາວ | ມ 2 | 1,143,000 | 952,500 | 762,000 |
| ເຮືອນ 2 ຊັ້ນ( ເຄິ່ງກໍ່ເຄິ່ງໄມ້) | ມ 2 | 1,026,000 | 855,000 | 684,000 |
| ເຮືອນກໍ່ແບບທັນສະໄໝ | ມ 2 | 921,000 | 767,500 | 614,000 |
| ເຮືອນກໍ່ແບບທຳມະດາ | ມ 2 | 702,000 | 585,000 | 468,000 |
| ເຮືອນໄມ້ | ມ 2 | 480,000 | 400,000 | 320,000 |

## ໝວດທີ 3
## ການຈົດທະບຽນ ທີ່ດິນ ແລະ ສິ່ງປຸກສ້າງ ການຄິດໄລ່ລາຄາ ແລະ ຄ່າທຳນຽມ

**ມາດຕາ 11 (ປັບປຸງ) ປະເພດຂອງການຈົດທະບຽນທີ່ດິນ ມີ 2 ປະເພດຄື:**

1. ການຈົດທະບຽນ ການເຄື່ອນໄຫວສິດນຳໃຊ້ທີ່ດິນແມ່ນການບັນທຶກ ແລະ ຢັ້ງຢືນສິດນຳໃຊ້ທີ່ດິນທີ່ເຈົ້າຂອງສິດນຳໃຊ້ທີ່ດິນໄດ້ເອົາສິດດັ່ງກ່າວໃຫ້ເຊົ່າ,ເປັນຫຼັກຊັບຄໍ້າປະກັນ, ຂາຍຝາກ, ທາດສະພາບຕາມສັນຍາ ສິດເໜືອທີ່ດິນ ແລະ ການເຄື່ອນໄຫວອື່ນ.

2. ການຈົດທະບຽນ ການປ່ຽນແປງສິດນຳໃຊ້ທີ່ດິນແມ່ນການບັນທຶກ ແລະ ຢັ້ງຢືນການປ່ຽນແປງສິດນຳໃຊ້ທີ່ດິນຈາກເຈົ້າຂອງສິດເດີມໄປໃຫ້ຜູ້ອື່ນດ້ວຍການອອກໃບຕາດິນໃໝ່ ຕາມການສືບທອດມູນມໍຣະດົກ, ຊື້ຂາຍ, ເອົາເຂົ້າເປັນຫຸ້ນ, ມອບ ຫຼື ຍົກສິດນຳໃຊ້ທີ່ດິນ, ແລກປ່ຽນ, ຖອນ ຫຼື ໂອນສິດນຳໃຊ້ທີ່ດິນຄືນ, ທາດສະພາບຕາມກົດໝາຍ, ຄຳຕັດສິນຂອງສານ.

**ມາດຕາ 12 ການຈົດທະບຽນສິ່ງປຸກສ້າງ**

ການຈົດທະບຽນສິ່ງປຸກສ້າງ ແມ່ນການບັນທຶກທຸກຂໍ້ມູນຂອງສິ່ງປຸກສ້າງ ທີ່ຕິດພັນກັບການປ່ຽນແປງສິດນຳໃຊ້ທີ່ດິນ ເຂົ້າໃສ່ປື້ມຈົດທະບຽນນິຕິກຳ.

**ມາດຕາ 13 ປະເພດສິ່ງປຸກສ້າງ**

1. ສິ່ງປຸກສ້າງທີ່ຢູ່ອາໄສປະກອບມີ 05 ປະເພດ ດັ່ງນີ້:
   - ເຮືອນແບບຊົງລາວ;
   - ເຮືອນ 2 ຊັ້ນ(ເຄິ່ງກໍ່ເຄິ່ງໄມ້);
   - ເຮືອນກໍ່ທັນສະໄໝ;
   - ເຮືອນກໍ່ທຳມະດາ;
   - ເຮືອນໄມ້.
2. ປະເພດສິ່ງປຸກສ້າງທີ່ນຳໃຊ້ເປັນສະຖານເຮັດວຽກ ແລະ ກິດຈະການດ້ານຕ່າງໆປະກອບມີ:

ອາຄານທີ່ໃຊ້ເປັນສະຖານທີ່ເຮັດວຽກງານ ຫຼື ກິດຈະການດ້ານຕ່າງໆ ເຊັ່ນ: ດ້ານສາທາລະນະສຸກ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການສຶກສາ, ວັດທະນະທຳ-ສັງຄົມ, ສາສະໜາ, ກິລາ, ທຸລະກິດການຄ້າ, ອຸດສາຫະກຳ, ກະສິກຳ ແລະ ອື່ນໆ.

**ມາດຕາ 14 ການຄິດໄລ່ມູນຄ່າຈົດທະບຽນທີ່ດິນ ແລະ ສິ່ງປຸກສ້າງ**

ການຄິດໄລ່ມູນຄ່າຈົດທະບຽນ ທີ່ດິນ ແມ່ນການເອົາເນື້ອທີ່ທັງໝົດຂອງທີ່ດິນ ຊຶ່ງມີຫົວໜ່ວຍເປັນຕາແມັດຕາມການລັງວັດແທກ, ກວດກາ ແລະ ຢັ້ງຢືນ ຂອງວິຊາການຈາກພາກສ່ວນກ່ຽວຂ້ອງ ຄູນໃຫ້ຫົວໜ່ວຍຄິດໄລ່ຕາມລາຄາເຂດປະເມີນທີ່ດິນ ແລ້ວຄູນອັດຕາສ່ວນຮ້ອຍ (%) ຂອງການມອບ-ໂອນສິດນຳ

ໃຊ້ທີ່ດິນແຕ່ລະປະເພດ ທີ່ກໍານົດໄວ້ໃນລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທໍານຽມ-ຄ່າບໍລິການ ທີ່ປະກາດໃຊ້ແຕ່ລະໄລຍະ.

ການຄິດໄລ່ມູນຄ່າສິ່ງປຸກສ້າງ ແມ່ນການເອົາເນື້ອທີ່ນໍາໃຊ້ທັງໝົດຂອງສິ່ງປຸກສ້າງ ຄູນໃຫ້ລາຄາປະເພດ ສິ່ງປຸກສ້າງ 10 ປີລົງມາ,10-20ປີ ແລະ 20 ປີຂຶ້ນໄປ ຕາມທີ່ໄດ້ກໍານົດໄວ້ໃນຕາຕາລາງການກໍານົດສິ່ງປຸກສ້າງ ຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ແຫ່ງ ສປປລາວ ສະບັບເລກທີ 69/ນຍ. ລົງວັນທີ 05 ສິງຫາ 2010 ວ່າດ້ວຍການຮັບຮອງເອົາ ແລະ ປະກາດໃຊ້ລາ ຄາຫົວໜ່ວຍກໍ່ສ້າງຂົວທາງ ແລະ ເຄຫາສະຖານ.

**ມາດຕາ 15 ຄ່າທໍານຽມ**

ຄ່າທໍານຽມຈົດທະບຽນ ການປ່ຽນແປງສິດນໍາໃຊ້ທີ່ດິນ ແລະ ສິ່ງປຸກສ້າງ ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ຕົກລົງສະບັບນີ້ ແມ່ນປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທໍານຽມ ແລະ ຄ່າ ບໍລິການ ທີ່ປະກາດໃຊ້ແຕ່ລະໄລຍະ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 16 ຂໍ້ຫ້າມສາລັບບຸກຄົນ, ນິຕິບຸກຄົນ**

ຂໍ້ຫ້າມສໍາລັບບຸກຄົນ, ນິຕິບຸກຄົນ ມີພຶດຕິກໍາໃດໜຶ່ງດັ່ງນີ້:

1. ຫ້າມບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງປະກອບເອກະສານກ່ຽວກັບການຈົດທະບຽນການປ່ຽນແປງ ສິດຄຸ້ມຄອງ, ນໍາໃຊ້ທີ່ດິນນໍາການຈັດຕັ້ງທີ່ກ່ຽວຂ້ອງ ມີການປອມແປງ ຫຼື ສົມຮູ້ຮ່ວມຄິດກັບພະນັກງານ, ເຈົ້າ ໜ້າທີ່ຮັບຜິດຊອບວຽກງານຈົດທະບຽນ ປອມແປງ, ແຈ້ງ, ສ້າງຂໍ້ມູນເທັດ, ສະໜອງຂໍ້ມູນອັນບໍ່ຖືກຕ້ອງຕາມ ຄວາມຈິງ ເພື່ອອໍານວຍຄວາມສະດວກ ແລະ ຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ, ຊຶ່ງເປັນການ ລະເມີດກົດໝາຍ ແລະ ຂໍ້ຕົກລົງສະບັບນີ້;

2. ຫ້າມບຸກຄົນ, ນິຕິບຸກຄົນ ໃຫ້ສິນບົນແກ່ເຈົ້າໜ້າທີ່, ພະນັກງານ ແລະ ການຈັດຕັ້ງຊຶ່ງເປັນການ ລະເມີດກົດໝາຍ ແລະ ຂໍ້ຕົກລົງສະບັບນີ້;

3. ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ຊື້-ຂາຍ,ມອບ-ໂອນ ແລະ ສືບມູນມໍລະດົກ ກ່ຽວກັບ ທີ່ດິນ ແລະ ສິ່ງປຸກສ້າງແລ້ວ ບໍ່ນໍາມາຈົດທະບຽນປ່ຽນແປງນິຕິກໍາກ່ຽວກັບສິດນໍາໃຊ້ທີ່ດິນ ແລະ ສິ່ງປຸກສ້າງ ນໍາຂະແໜງທີ່ດິນໃຫ້ຖືກຕ້ອງ ຊຶ່ງເປັນການລະເມີດກົດໝາຍ ແລະ ຂໍ້ຕົກລົງສະບັບນີ້ຢ່າງເດັດຂາດ.

**ມາດຕາ 17 ຂໍ້ຫ້າມສໍາລັບເຈົ້າໜ້າທີ່, ພະນັກງານ ແລະ ການຈັດຕັ້ງ**

ຂໍ້ຫ້າມສໍາລັບເຈົ້າໜ້າທີ່, ພະນັກງານ ແລະ ການຈັດຕັ້ງມີພຶດຕິກໍາໃດໜຶ່ງດັ່ງນີ້:

1. ຫ້າມສວຍໃຊ້ໜ້າທີ່ຕໍາແໜ່ງ ແລະ ຄວາມຮັບຜິດຊອບ ສົມຮູ້ຮ່ວມຄິດກັບບຸກຄົນ, ນິຕິບຸກຄົນ ເພື່ອ ຫາຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ໃນການຈົດທະບຽນເອກະສານນິຕິກໍາເຖື່ອນໄຫວສິດ ແລະ ປ່ຽນແປງສິດນໍາໃຊ້ທີ່ດິນ ແລະ ສິ່ງປຸກສ້າງ ເຊິ່ງເປັນການລະເມີດກົດໝາຍ ແລະ ຂໍ້ຕົກລົງສະບັບນີ້;

2. ຫ້າມຮັບ ຫຼື ທວງເອົາສິນບົນຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງເພື່ອຫາຜົນປະໂຫຍດແກ່ຕົນ;

3. ຫ້າມກົດໜ່ວງ, ຖ່ວງດຶງເກີນກວ່າເວລາທີ່ທາງການກໍານົດໄວ້, ມີການຊຸກເຊື່ອງ ຫຼື ທໍາລາຍເອກະສານ ນິຕິກໍາກ່ຽວກັບການຂໍຈົດທະບຽນທີ່ດິນ ແລະ ສິ່ງປຸກສ້າງ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງເກີນ ກວ່າເວລາທີ່ລະບຽບການກໍານົດໄວ້ຢ່າງເດັດຂາດ;

4. ຫ້າມມີພຶດຕິກໍາອື່ນໆ ທີ່ເປັນການລະເມີດກົດໝາຍ ແລະ ຂໍ້ຕົກລົງສະບັບນີ້.

## ໝວດທີ 5
## ອົງການຄຸ້ມຄອງ

### ມາດຕາ 18 ອົງການຄຸ້ມຄອງ

ອົງການປົກຄອງແຂວງ ເປັນຜູ້ຄຸ້ມຄອງຢ່າງລວມສູນໃນຂອບເຂດທົ່ວແຂວງ, ໂດຍມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ເປັນເຈົ້າການໃນການຄຸ້ມຄອງໂດຍກົງ ແລະ ເປັນໃຈກາງໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເຊິ່ງປະກອບດ້ວຍ:

- ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ;
- ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ນະຄອນ;
- ອົງການປົກຄອງບ້ານ.

### ມາດຕາ 19 ສິດ ແລະ ໜ້າທີ່ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ

1. ໂຄສະນາ ເຜີຍແຜ່ ລັດຖະທຳມະນູນ ກົດໝາຍ, ມະຕິ, ຄຳສັ່ງ, ຂໍ້ຕົກລົງ ແລະ ບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງ ໃຫ້ບັນດາການຈັດຕັ້ງຂັ້ນແຂວງ, ເມືອງຕະຫຼອດຮອດບ້ານ ຢ່າງທົ່ວເຖິງກ່ຽວກັບວຽກງານຊີ້ນຳ, ຄຸ້ມຄອງ, ຊຸກຍູ້ວຽກງານເກັບລາຍຮັບຈາກອາກອນທີ່ດິນ ຢູ່ບັນດາເມືອງ/ນະຄອນ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຈົດທະບຽນທີ່ດິນ ທົ່ວແຂວງ;

2. ຄຸ້ມຄອງ-ບໍລິຫານ, ຈັດຕັ້ງປະຕິບັດວຽກງານຈົດທະບຽນປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງໃນຂອບເຂດ ທົ່ວແຂວງ;

3. ປະຕິບັດຕາມກົດໝາຍ, ດຳລັດ, ຄຳສັ່ງ, ຂໍ້ຕົກລົງ, ແຈ້ງການ ແລະ ຄຳແນະນຳກ່ຽວກັບວຽກງານການຈົດທະບຽນປະເມີນລາຄາ ທີ່ດິນ ແລະ ສິ່ງປຸກສ້າງ;

4. ປະສານສົມທົບໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ຕິດຕາມ ແລະ ກວດກາ ນຳພະແນກການທີ່ກ່ຽວຂ້ອງ ເປັນຕົ້ນ: ພະແນກການເງິນ, ສ່ວຍສາອາກອນປະຈຳແຂວງ, ພະແນກໂຍທາທິການ ແລະ ຂົນສົ່ງພະແນກກະສິກຳ ແລະ ປ່າໄມ້ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ຊຸກຍູ້, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດຂອງໜ່ວຍງານ, ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ວຽກງານຂຶ້ນທະບຽນ, ຈົດທະບຽນປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ເພື່ອສະກັດກັ້ນປະກົດການຫຍໍ້ທໍ້ ກ່ຽວກັບການຈົດທະບຽນນິຕິກຳກ່ຽວກັບທີ່ດິນ ແລະ ສິ່ງປຸກສ້າງ ຕາມຂໍ້ຕົກລົງສະບັບນີ້;

6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໃນກົດໝາຍ ແລະ ລະບຽບການ.

### ມາດຕາ 20 ສິດ ແລະ ໜ້າທີ່ຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ນະຄອນ

1. ໂຄສະນາ, ເຜີຍແຜ່ກົດໝາຍ, ມະຕິ, ຄຳສັ່ງ, ຂໍ້ຕົກລົງ ແລະ ບັນດານິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງໃຫ້ບັນດາການຈັດຕັ້ງຂັ້ນ ເມືອງ, ນະຄອນ, ບ້ານ ແລະ ປະຊາຊົນໃຫ້ຮັບຮູ້ ແລະ ເຊື່ອມຊຶມຢ່າງທົ່ວເຖິງ;

2. ຊີ້ນຳ, ຄຸ້ມຄອງ, ຊຸກຍູ້ວຽກງານເກັບລາຍຮັບຈາກອາກອນທີ່ດິນ ຢູ່ພາຍໃນເມືອງ, ນະຄອນຊຸກຍູ້ຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານຈົດທະບຽນທີ່ດິນຂອງບ້ານ;

3. ຈົດທະບຽນປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ໃນຂອບເຂດທົ່ວເມືອງ, ນະຄອນ;

4. ເກັບກຳຂໍ້ມູນການເຄື່ອນເໜັງລາຄາທີ່ດິນ ແລະ ສິ່ງປຸກສ້າງ ຕາມການຂະຫຍາຍຕົວທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ, ພື້ນຖານໂຄງລ່າງພາຍໃນເມືອງ, ນະຄອນ;

5. ນຳສະເໜີ, ລາຍງານພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເພື່ອຂໍຄຳເຫັນກ່ຽວກັບການກຳນົດເຂດປະເມີນລາຄາທີ່ດິນບັນດາເມືອງ ແລະ ນະຄອນ ທີ່ມີຊາຍແດນຕິດຈອດກັນເປັນແຕ່ລະໄລຍະ;

6. ປະສານສົມທົບໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ຕິດຕາມ ແລະ ກວດການຳຫ້ອງການກ່ຽວຂ້ອງເປັນຕົ້ນ: ຫ້ອງການການເງິນ, ສ່ວຍສາອາກອນປະຈຳເມືອງ/ນະຄອນ, ຫ້ອງການໂຍທາທິການ ແລະ ຂົນສົ່ງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ນະຄອນ ເພື່ອຮັບປະກັນຄວາມຖືກຕ້ອງສອດຄ່ອງໃນການປະຕິບັດລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ**

1. ໂຄສະນາ, ເຜີຍແຜ່ຂໍ້ຕົກລົງ, ມະຕິ, ຄຳສັ່ງ ແລະ ບັນດາກົດໝາຍກ່ຽວຂ້ອງໃຫ້ບັນດາການຈັດຕັ້ງຕະຫຼອດຮອດປະຊາຊົນບັນດາເຜົ່າພາຍໃນບ້ານກ່ຽວກັບວຽກງານຄຸ້ມຄອງການຈົດທະບຽນທີ່ດິນ ແລະ ສິ່ງປຸກສ້າງ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງຢ່າງທົ່ວເຖິງ;

2. ຊີ້ນຳ, ຄຸ້ມຄອງ, ເກັບລາຍຮັບຈາກອາກອນທີ່ດິນພາຍໃນບ້ານຂອງຕົນ, ຊຸກຍູ້ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດວຽກງານຈົດທະບຽນທີ່ດິນ ຂອງໜ່ວຍງານທີ່ດິນຂັ້ນບ້ານ;

3. ຮ່ວມມື ແລະ ອຳນວຍຄວາມສະດວກ ໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ໃນການເກັບກຳຂໍ້ມູນທີ່ດິນ ແລະ ສິ່ງປຸກສ້າງ ສັງລວມຂໍ້ມູນໄວ້ໃນຂອບເຂດການປົກຄອງບ້ານ ແລະ ປະສານສົມທົບກັບບັນດາບ້ານທີ່ມີເຂດແດນຕິດຈອດກັບບ້ານຕົນ;

4. ຢັ້ງຢືນ ການໄດ້ມາຂອງກຳມະສິດທີ່ດິນ ແລະ ສິ່ງປຸກສ້າງ, ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນບ້ານຂອງຕົນ;

5. ເກັບກຳຂໍ້ມູນ, ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດຂອງໜ້າທີ່ຂອງພະນັກງານ, ເຈົ້າໜ້າທີ່ກ່ຽວກັບວຽກງານການຈົດທະບຽນທີ່ດິນ ແລະ ສິ່ງປຸກສ້າງ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ ແລະ ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 6
## ການກວດກາ

**ມາດຕາ 22 ອົງການກວດກາ**

ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານຈົດທະບຽນທີ່ດິນ ແລະ ສິ່ງປຸກສ້າງ ຕາມທີ່ກຳນົດໄວ້ໃນມາດຕາ 18 ຂອງຂໍ້ຕົກລົງສະບັບນີ້.

ອົງການກວດກາພາຍນອກ ສະພາປະຊາຊົນແຂວງ, ແນວລາວສ້າງຊາດ, ອົງການກວດກາລັດທຸກຂັ້ນ, ອົງການກວດກາພາກການ 2, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ສື່ມວນຊົນ.

**ມາດຕາ 23 ເນື້ອໃນກວດກາ.**

1. ກວດກາການປະຕິບັດກົດໝາຍ, ນະໂຍບາຍ, ຂໍ້ຕົກລົງ, ລະບຽບການ ກ່ຽວກັບການຄຸ້ມຄອງການກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ຂອງບັນດາເມືອງ ແລະ ນະຄອນ ເປັນແຕ່ລະໄລຍະ;

2. ກວດກາປະເພດ, ເນື້ອໃນ ກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ແຕ່ລະປະເພດຂອງດິນ;

3. ກວດກາການປະຕິບັດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

4. ກວດກາຕາມການສະເໜີ, ການຮ້ອງຂໍຂອງບຸກຄົນ ນິຕິບຸກຄົນ ແລະ ການຈັດຕັ້ງ.

**ມາດຕາ 24 ຮູບການກວດກາ**

ຮູບການກວດກາ ມີ 03 ຮູບການດັ່ງນີ້:

1. ການກວດກາຕາມແຜນປົກກະຕິ ແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ເຊິ່ງປະຕິບັດຢ່າງໜ້ອຍສອງຄັ້ງຕໍ່ປີ;

2. ການກວດກາແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດກາທີ່ມີການຮ້ອງຟ້ອງເມື່ອເຫັນວ່າມີຄວາມຈຳເປັນ ເຊິ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າຢ່າງໜ້ອຍ ຊາວສີ່ຊົ່ວໂມງ;

3. ການກວດກາແບບກະທັນຫັນແມ່ນການກວດກາໃນເວລາທີ່ມີເຫດການຊຸບຊິບເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາ ຮູ້ລ່ວງໜ້າ.

## ໝວດທີ 7
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 25 ຮູບການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການຈົດທະບຽນ, ປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ອາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການໄກ່ເກ່ຍ ຫຼື ປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຕໍ່ສານ;
5. ການແກ້ໄຂທີ່ມີລັກສະນະສາກົນ;
6. ການແກ້ໄຂຄຳຮ້ອງຂໍຄວາມເປັນທຳ.

### ມາດຕາ 26 ການໄກ່ເກ່ຍ ຫຼື ປະນີປະນອມ

ໃນກໍລະນີເກີດຂໍ້ຂັດແຍ່ງ, ຄູ່ກໍລະນີສາມາດເຈລະຈາ, ປະນີປະນອມກັນ ຫຼື ໄກ່ເກ່ຍກັນບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດທີ່ສົມເຫດສົມຜົນ ແລະ ເປັນທຳ.

### ມາດຕາ 27 ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີເກີດຂໍ້ຂັດແຍ່ງ ຄູ່ກໍລະນີ ບໍ່ສາມາດໄກ່ເກ່ຍດ້ວຍຮູບການປະນີປະນອມກັນໄດ້, ຝ່າຍໃດຝ່າຍໜຶ່ງມີສິດສະເໜີຕໍ່ອົງການຄຸ້ມຄອງ ຫຼື ອົງການບໍລິຫານ ແຕ່ລະຂັ້ນບ່ອນທີ່ດິນໄດ້ຮັບອະນຸຍາດນັ້ນເປັນຜູ້ພິຈາລະນາແກ້ໄຂ.

### ມາດຕາ 28 ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນກໍລະນີເກີດຂໍ້ຂັດແຍ່ງ ທີ່ພົວພັນກັບການດຳເນີນທຸລະກິດ, ຄູ່ກໍລະນີສາມາດຮ້ອງຂໍຕໍ່ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂ.

### ມາດຕາ 29 ການຮ້ອງຟ້ອງຕໍ່ສານ

ໃນກໍລະນີເກີດຂໍ້ຂັດແຍ່ງຄູ່ກໍລະນີຝ່າຍໃດ ຝ່າຍໜຶ່ງ ມີສິດຮ້ອງຟ້ອງຕໍ່ສານ ປະຊາຊົນເພື່ອພິຈາລະນາຕັດສິນຕາມກົດໝາຍ.

### ມາດຕາ 30 ການແກ້ໄຂທີ່ມີລັກສະນະສາກົນ

ການແກ້ໄຂລັກສະນະສາກົນ ໃຫ້ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ.

### ມາດຕາ 31 ການແກ້ໄຂຄຳຮ້ອງຂໍຄວາມເປັນທຳ

ການແກ້ໄຂຄຳຮ້ອງຂໍຄວາມເປັນທຳຕາມກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງປີ 2022) ແມ່ນຄຳຮ້ອງທີ່ຍື່ນຕໍ່ຄະນະປະຈຳສະພາປະຊາຊົນແຂວງ ເພື່ອໃຫ້ກວດກາ ແລະ ພິຈາລະນາກ່ຽວກັບການຕົກລົງຂອງອົງການປົກຄອງທ້ອງຖິ່ນ, ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ອົງການສານປະຊາຊົນ ທີ່ເຫັນວ່າ ການແກ້ໄຂນັ້ນເປັນການລະເມີດກົດໝາຍ ກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 32 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງທີ່ມີຜົນງານດີເດັ່ນ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ໄດ້ຮັບນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 33 ມາດຕະການຕໍ່ຜູ້ລະເມີດ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້, ຈະຖືກປະຕິບັດມາດຕາການ, ສຶກສາອົບຮົມ, ກ່າວເຕືອນ, ປະຕິບັດວິໄນ ຫຼື ດຳເນີນຄະດີຕາມກົດໝາຍ ຕາມສະຖານໜັກ ຫຼື ເບົາ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 34 ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ນະຄອນ, ອົງການປົກຄອງບ້ານ ເປັນຜູ້ຈັດຕັ້ງປະຕິບັດ, ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ພະແນກການ, ອົງການທຽບເທົ່າຂັ້ນແຂວງ, ເມືອງ, ນະຄອນ, ອົງການປົກຄອງບ້ານ, ບຸກຄົນ, ນິຕິບຸກຄົນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 35 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງຂອງເຈົ້າແຂວງສະຫວັນນະເຂດ ສະບັບເລກທີ 1919/ຈຂ.ສຂ, ລົງວັນທີ 04 ພະຈິກ 2020 ວ່າດ້ວຍການກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ຂອງແຂວງສະຫວັນນະເຂດ.

ຂໍ້ກຳນົດ, ບົດບັນຍັດໃດທີ່ອອກໃນເມື່ອກ່ອນ ກ່ຽວກັບການປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງທົ່ວແຂວງສະຫວັນນະເຂດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ເຈົ້າແຂວງ

ແຂວງສະຫວັນນະເຂດ
ເຈົ້າແຂວງ

ບຸນໂຈມ ອຸບົນປະເສີດ